# ບົດລາຍງານຜົນການຕິດຕາມສະຫວັດດີການຂອງຄົວເຮືອນ ຢູ່ ສປປ ລາວ

## ສັງລວມຜົນໄດ້ຮັບຈາກການສຳຫຼວດທາງໂທລະສັບ ເພື່ອຕິດຕາມສະຫວັດດີການຂອງຄົວເຮືອນ

ພາກສະເໜີ

ເສດຖະກິດລາວ ກຳລັງຜະເຊີນສິ່ງທ້າທາຍເພີ່ມສູງຂຶ້ນ ຈາກບັນຫາການອ່ອນຄ່າຂອງເງິນກີບ ແລະ ເງິນເຟີ້ສູງ ທ່າມກາງສະພາບເສດຖະກິດໂລກ ທີ່ຍັງບໍ່ແນ່ນອນ ແລະ ບັນດາການປະຕິຮູບພາຍໃນ ທີ່ກໍາລັງຈັດຕັ້ງປະຕິບັດບໍ່ວ່ອງໄວເທົ່າທີ່ຄວນ. ລະດັບໜີ້ສາທາລະນະທີ່ສູງ ແລະ ຄັງແຮເງິນຕາຕ່າງປະເທດທີ່ຕ່ຳ ເປັນສາເຫດເຮັດໃຫ້ເງິນກີບອ່ອນຄ່າລົງ ຊັກໄຊ້ ເຊິ່ງເຫັນໄດ້ຈາກການອ່ອນຄ່າລົງເຖິງ 50 ສ່ວນຮ້ອຍໃນໄລຍະຂ້າມປີ ອີງຕາມຂໍ້ມູນຮອດເດືອນມັງກອນ 2023. ດ້ວຍເຫດນັ້ນ, ລາຄາສິນຄ້ານຳເຂົ້າ ເຊິ່ງລວມທັງນ້ຳມັນເຊື້ອໄຟ, ສະບຽງອາຫານ, ຢາປົວພະຍາດ ພົບວ່າ: ເພີ່ມສູງຂຶ້ນ. ໃນເດືອນມັງກອນ 2023 ອັດຕາເງິນເຟີ້ ເພີ່ມຂຶ້ນຮອດ 40,3 ສ່ວນຮ້ອຍ (ຂໍ້ມູນປີຕໍ່ປີ). ເຖິງວ່າກິດຈະກຳທາງເສດຖະກິດມີທ່າອ່ຽງທ່າດີຂຶ້ນ ໃນຫວ່າງບໍ່ດົນຜ່ານມານີ້ ແຕ່ຄ່າຄອງຊີບທີ່ເພີ່ມສູງຂຶ້ນ ໄດ້ສົ່ງຜົນຄຸກຄາມຕໍ່ມາດຕະຖານການດຳລົງຊີວິດຂອງກຸ່ມຄົວເຮືອນຕ່າງໆ.

ທະນາຄານໂລກ ໄດ້ສ້າງຊຸດການສຳຫຼວດທາງໂທລະສັບ ເພື່ອຕິດຕາມສະຫວັດດີການຂອງຄົວເຮືອນຢູ່ ສປປ ລາວ ຢ່າງເປັນປະຈຳປົກກະຕິ ໂດຍໄດ້ເຮັດການສຳຫຼວດຮອບທີໜຶ່ງ ໃນໄລຍະຄັ້ງວັນທີ 20 ມິຖຸນາ ເຖິງ 16 ກໍລະກົດ 2020 ເຊິ່ງເປັນຊ່ວງໄລຍະເວລາເກີດພະຍາດລະບາດໂຄວິດ 19 ແລະເປັນໄລຍະເວລາດຽວກັນກັບທີ່ ສປປ ລາວ ຫາກໍ່ຍຸຕິການຈຳກັດການເຄື່ອນໄຫວໄປມາຂອງພົນລະເມືອງທົ່ວປະເທດໃນເບື້ອງຕົ້ນ. ສ່ວນການສຳຫຼວດຮອບທີສອງ ແມ່ນໄດ້ຈັດຕັ້ງປະຕິບັດໃນໄລຍະຄັ້ງວັນທີ 26 ກຸມພາ ເຖິງ 24 ມີນາ 2021, ໜຶ່ງປີຫຼັງເກີດພະຍາດລະບາດໂຄວິດ 19. ການສຳຫຼວດຮອບທີສາມ ຈັດຕັ້ງປະຕິບັດໃນໄລຍະຄັ້ງວັນທີ 26 ເມສາ ເຖິງ 30 ພຶດສະພາ 2021 ເປັນເວລາດຽວກັນກັບທີ່ມີການຈຳກັດການເຄື່ອນໄຫວໄປມາຂອງພົນລະເມືອງໃນຮອບສອງ.

ການສຳຫຼວດຮອບທີສີ່ ໄດ້ຈັດຕັ້ງປະຕິບັດໃນໄລຍະຄັ້ງວັນທີ 25 ຕຸລາ ເຖິງ 19 ພະຈິກ 2021 ເຊິ່ງເປັນໄລຍະເວລາທີ່ມີການຜ່ອນຜັນບາງມາດຕະການຈຳກັດການເຄື່ອນໄຫວໄປມາຂອງພົນລະເມືອງ. ການສຳຫຼວດຮອບທີຫ້າ ໄດ້ມີຂຶ້ນໃນໄລຍະວັນທີ 29 ເມສາ ເຖິງ 23 ພຶດສະພາ 2022 ເຊິ່ງເປັນໄລຍະເວລາທີ່ຜົນກະທົບຂອງພະຍາດລະບາດໂຄວິດ 19 ຄ່ອຍເບົາບາງລົງ ແລະ ທັງເປັນໄລຍະເລີ່ມຕົ້ນຂອງສະພາບການຂາດສະເຖຍລະພາບທາງດ້ານເສດຖະກິດມະຫາພາກ ແລະ ບັນຫາເງິນເຟີ້. ການສຳຫຼວດຮອບທີຫົກ ມີຂຶ້ນໃນໄລຍະຄັ້ງວັນທີ 5 ທັນວາ 2022 ເຖິງ ວັນທີ 4 ມັງກອນ 2023

ເຊິ່ງເປັນໄລຍະທີ່ອັດຕາເງິນເຟີ້ ເພີ່ມສູງຂຶ້ນ ໃນລະດັບ 40,3 ສ່ວນຮ້ອຍ ໂດຍສູງຂຶ້ນຈາກ 12,8 ສ່ວນຮ້ອຍ (ຂໍ້ມູນປີຕໍ່ປີ) ເມື່ອເດືອນພຶດສະພາ 2022.[1] ຂໍ້ມູນການຕິດຕາມດັ່ງກ່າວ ຊ່ວຍໃຫ້ເຫັນພາບເບື້ອງເລິກຂອງຜົນກະທົບທາງເສດຖະກິດ ຕໍ່ຄວາມຢູ່ດີມີສຸກຂອງຄົວເຮືອນ. ບົດລາຍງານສະບັບນີ້ ສັງລວມໃຫ້ເຫັນບັນດາສິ່ງຄົ້ນພົບຕ່າງໆຈາກການສຳຫຼວດຮອບທີຫົກ.

| ສິ່ງທີ່ຄົ້ນພົບຫຼັກ |
|---|
| ➢ ການມີວຽກເຮັດງານທຳ ເຫັນວ່າ: ດີຂຶ້ນເລັກນ້ອຍໃນທ້າຍເດືອນທ້າຍປີ 2022, ໂດຍຜູ້ອອກແຮງງານ ເຄື່ອນຍ້າຍຈາກຂະແໜງການກະສິກຳ ໄປສູ່ ຂະແໜງການບໍລິການ. ພົບວ່າ: ຜູ້ອອກແຮງງານທີ່ບໍ່ມີສີມືແຮງງານ ແລະ ຜູ້ອອກແຮງງານໃນເຂດຊົນນະບົດ ໄດ້ຮັບຜົນປະໂຫຍດຈາກການຟື້ນຕົວຂອງຕະຫຼາດແຮງງານ. ສ່ວນຄວາມແຕກໂຕນລະຫວ່າງເພດ ແລະ ກຸ່ມລາຍໄດ້ ແມ່ນມີບໍ່ຫຼາຍ, ເຫັນໄດ້ວ່າຜູ້ອອກແຮງງານເພດຊາຍ ແລະ ຜູ້ອອກແຮງງານທີ່ມີລາຍໄດ້ຕ່ຳ ໄດ້ຮັບຜົນປະໂຫຍດດີກວ່າກຸ່ມອື່ນເລັກນ້ອຍ. |
| ➢ ລາຍໄດ້ຈາກການອອກແຮງງານ ເຫັນວ່າ: ດີຂຶ້ນ ໂດຍສ່ວນແບ່ງຂອງຜູ້ອອກແຮງງານ ທີ່ຈຳເປັນຕ້ອງເຮັດວຽກທີສອງຕື່ມຈາກວຽກປະຈຳ ພົບວ່າ: ມີການຫຼຸດລົງ. |
| ➢ ປະມານ 11% ຂອງຄົວເຮືອນທີ່ເຮັດການຜະລິດກະສິກຳ ປະເຊີນຄວາມຫຍຸ້ງຍາກໃນປີ 2022 ເຊິ່ງຈຸດໜັກແມ່ນຍ້ອນໄພພິບັດທາງທຳມະຊາດ ແລະ ບັນຫາຂາດແຄນແຫຼ່ງທຶນ ແລະ ແຮງງານ. |
| ➢ ລາຍໄດ້ຂອງທຸລະກິດຄອບຄົວ ພົບວ່າ: ມີການປັບປຸງດີຂຶ້ນໃນປີ 2022, ເວົ້າສະເພາະທຸລະກິດການຜະລິດກະສິກຳ ແມ່ນໄດ້ສ້າງຜົນປະໂຫຍດໃຫ້ຄົວເຮືອນທີ່ມີລາຍໄດ້ຕ່ຳ ແລະ ບັນດາຄົວເຮືອນໃນເຂດຊົນນະບົດ. |
| ➢ ສ່ວນແບ່ງຂອງຄົວເຮືອນ ທີ່ການສູນເສຍລາຍໄດ້ ຍ້ອນພະຍາດລະບາດໂຄວິດ 19 ພົບວ່າຍັງສືບຕໍ່ ຫຼຸດລົງ ຄື: ຫຼຸດລົງຈາກ 43,4% ໃນເດືອນເມສາ/ພຶດສະພາ 2022 ມາເປັນ 35,1% ໃນເດືອນທັນວາ /ມັງກອນ 2022-23. |
| ➢ ຫຼາຍຄົວເຮືອນ ໄດ້ມີການກະຈາຍແຫຼ່ງລາຍໄດ້ຂອງຕົນ. ລະຫວ່າງໄລຍະການສຳຫຼວດຄັ້ງເດືອນເມສາ/ພຶດສະພາ 2022 ເຖິງ ເດືອນທັນວາ/ມັງກອນ 2022-23, ຫຼາຍຄົວເຮືອນໃນເຂດຊົນນະບົດ ໄດ້ມີການກະຈາຍແຫຼ່ງລາຍໄດ້ຂອງຕົນ ດ້ວຍການເຮັດບັນດາກິດຈະກຳຕ່າງໆເພື່ອເສີມສ້າງລາຍໄດ້ ສ່ວນຫຼາຍຄົວເຮືອນໃນເຂດຕົວເມືອງ ພົບວ່າ: ມີລາຍໄດ້ຈາກທຸລະກິດຕ່າງໆ ແລະ ເງິນໂອນຈາກຕ່າງປະເທດ. |
| ➢ ເກືອບ 90% ຂອງຜູ້ຕອບສຳພາດ ໄດ້ລາຍງານວ່າ: ຄົວເຮືອນຂອງຕົນ ໄດ້ຮັບຜົນກະທົບຈາກບັນຫາເງິນເຟີ້ ນັບແຕ່ຕົ້ນປີ 2022, ເຊິ່ງໃນນັ້ນ 57% ເຫັນວ່າ: ປະເຊີນກັບຜົນກະທົບດັ່ງກ່າວໃນລະດັບຮຸນແຮງ. |
| ➢ ໃນການຮັບມືກັບລາຄານ້ຳມັນເຊື້ອໄຟທີ່ເພີ່ມສູງຂຶ້ນ ພົບວ່າ ປະມານ 80% ຂອງຄົວເຮືອນ ທີ່ໄດ້ຮັບຜົນກະທົບ ໄດ້ພາກັນຫຼຸດການຊົມໃຊ້ນ້ຳມັນເຊື້ອໄຟ ຕະຫຼອດເຖິງສິນຄ້າແລະບໍລິການທີ່ບໍ່ແມ່ນນ້ຳມັນເຊື້ອໄຟລົງ. ນອກນີ້ຍັງພົບອີກວ່າ: ມີຄວາມເປັນໄປໄດ້ສູງ ທີ່ບັນດາຄົວເຮືອນທີ່ມີລາຍໄດ້ຕ່ຳ ຈຳເປັນຕ້ອງຂາຍຊັບສິນຂອງຕົນ ແລະ ສະແຫວງຫາໂອກາດສ້າງລາຍໄດ້ໃນຮູບແບບຕ່າງໆ ເພື່ອຮັບມືກັບລາຄານ້ຳມັນເຊື້ອໄຟທີ່ເພີ່ມສູງຂຶ້ນ ໃນຂະນະທີ່ຄົວເຮືອນທີ່ມີລາຍໄດ້ສູງ ສາມາດນຳເອົາເງິນແຮທີ່ມີຢູ່ຂອງຕົນອອກມາໃຊ້ຈ່າຍ. |
| ➢ ຄົວເຮືອນທີ່ໄດ້ຮັບຜົນກະທົບຫຼາຍທີ່ສຸດ ຕອບໂຕ້ຕໍ່ບັນຫາເງິນເຟີ້ຂອງລາຄາສະບຽງອາຫານ ດ້ວຍການປູກແລະຜະລິດອາຫານເອງ (87,5%) ຫຼື ຫາອາຫານຕາມທຳມະຊາດ (68,7%), ປ່ຽນໄປກິນອາຫານລາຄາທີ່ຖືກລົງ (77,1%) ຫຼື ຫຼຸດການບໍລິໂພກອາຫານ (65,7%). ເພື່ອຮັບມືກັບລາຄາສະບຽງອາຫານທີ່ເພີ່ມສູງຂຶ້ນ ພົບວ່າ: ມີຄວາມເປັນໄປໄດ້ສູງ ທີ່ຄົວເຮືອນລາຍໄດ້ຕ່ຳ ຈະກູ້ຢືມເງິນ ແລະ ຊື້ເຄື່ອງຕິດໜີ້ ເມື່ອສົມທຽບໃສ່ຄົວເຮືອນທີ່ມີລາຍໄດ້ສູງ. |
| ➢ ຫຼາຍກວ່າ 90% ຂອງທຸລະກິດຄອບຄົວ ລາຍງານວ່າ: ເຂົາເຈົ້າ ປະເຊີນສິ່ງທ້າທາຍຫຼາຍຢ່າງດ້ານການດຳເນີນທຸລະກິດ ຍ້ອນບັນຫາເງິນເຟີ້ທີ່ເຮັດໃຫ້ນ້ຳມັນເຊື້ອໄຟ ແລະ ສິນຄ້າທີ່ບໍ່ແມ່ນນ້ຳມັນເຊື້ອໄຟ ມີລາຄາເພີ່ມສູງຂຶ້ນ, ຕະຫຼອດເຖິງບັນຫາການອ່ອນຄ່າຂອງເງິນກີບ ແລະ ບັນຫາຂາດແຄນນ້ຳມັນເຊື້ອໄຟ. ບັນດາປັດໄຈດັ່ງກ່າວນີ້ ຍັງສົ່ງຜົນເຮັດໃຫ້ ເກືອບເຄິ່ງໜຶ່ງຂອງຈຳນວນທຸລະກິດຄອບຄົວທັງໝົດ ໄດ້ຮັບຜົນກະທົບທາງລົບຕໍ່ຜົນກຳໄລຂອງພວກເຂົາ. |
| ➢ ປະມານ 90% ຂອງຄົວເຮືອນທີ່ເຮັດການຜະລິດກະສິກຳ ລາຍງານສະພາບຄວາມຫຍຸ້ງຍາກ ຍ້ອນການເພີ່ມຂຶ້ນຂອງລາຄານ້ຳມັນເຊື້ອໄຟ ແລະ ລາຄາປັດໄຈການຜະລິດກະສິກຳ. ໃນບັນດາປັດໄຈການຜະລິດ, ລາຄານ້ຳມັນເຊື້ອໄຟທີ່ເພີ່ມສູງຂຶ້ນ ຖືວ່າສິ່ງຜົນກະທົບຢ່າງໃຫຍ່ຫຼວງ. ບັນຫາເງິນເຟີ້ຂອງລາຄາປັດໄຈການຜະລິດ ເປັນຜົນນຳໄປສູ່ການຫຼຸດລົງຂອງຜົນຜະລິດພືດພັນທັນຍາຫານ. |

[1] ການສຳຫຼວດດັ່ງກ່າວ ແມ່ນໄດ້ຮັບທຶນຈັດຕັ້ງປະຕິບັດໂດຍກະຊວງການຕ່າງປະເທດແລະການຄ້າຂອງປະເທດອົດສະຕາລີ (DFAT) ຜ່ານໂຄງການປັບປຸງການຄຸ້ມຄອງການເງິນແຫ່ງລັດໄລຍະສາມ ຂອງ ສປປ ລາວ ເຊິ່ງຈັດຕັ້ງປະຕິບັດໂດຍທະນາຄານໂລກ.

- ໄພພິບັດທຳມະຊາດຕ່າງໆ ສົ່ງຜົນກະທົບໃນລະດັບສູງຕໍ່ການຜະລິດພືດສະບຽງອາຫານຢູ່ ສປປ ລາວ. ດ້ວຍເຫດນັ້ນ, ມາດຕະການການຜະລິດກະສິກຳແບບປັບຕົວຕາມການປ່ຽນແປງສະພາບດິນຟ້າອາກາດ ເພື່ອຫຼຸດຜ່ອນຜົນກະທົບຈາກການປ່ຽນແປງສະພາບດິນຟ້າອາກາດ ຖືເປັນສິ່ງສຳຄັນຍິ່ງ.
- ບັນຫາເງິນເຟີ້ ສົ່ງຜົນກະທົບທາງລົບຕໍ່ຄົວເຮືອນສ່ວນໃຫຍ່ ໂດຍບັນຫາເງິນເຟີ້ໄດ້ບີບຮັດງົບປະມານການໃຊ້ຈ່າຍຂອງຄົວເຮືອນລົງ, ບີບບັງຄັບໃຫ້ປະຊາຊົນຕ້ອງກູ້ຢືມ ຫຼື ເອົາເງິນແຮ ອອກມາໃຊ້, ແລະ ຕ້ອງຕັດຄ່າໃຊ້ຈ່າຍດ້ານການເບິ່ງແຍງສຸຂະພາບ ແລະ ການສຶກສາລົງ. ໃນຈຳນວນຜູ້ທີ່ໄດ້ຮັບຜົນກະທົບຈາກບັນຫາເງິນເຟີ້ 56% ແລະ 58% ຂອງຄົວເຮືອນທັງໝົດ ລາຍງານວ່າ: ຈຳເປັນຕ້ອງໄດ້ຕັດຄ່າໃຊ້ຈ່າຍດ້ານການສຶກສາແລະຄ່າໃຊ້ຈ່າຍດ້ານການເບິ່ງແຍງສຸຂະພາບລົງຕາມລຳດັບ. ໃນຂະນະທີ່ອີກ 90% ກ່າວວ່າ: ເຂົາເຈົ້າ ຕ້ອງເອົາເງິນແຮ ອອກມາໃຊ້. ການຫົດຕົວຂອງລາຍຈ່າຍດ້ານການເບິ່ງແຍງສຸຂະພາບແລະການສຶກສາ ພົບວ່າ: ຢູ່ໃນລະດັບສູງສຸດ ໃນກຸ່ມຄອບຄົວໃນເຂດຊົນນະບົດ ແລະ ຄອບຄົວທຸກຍາກທີ່ດຳລົງຊີວິດດ້ວຍງົບປະມານຈຳກັດ.
- ພົບວ່າ: ອັດຕາປະລະການຮຽນໃນກຸ່ມເດັກຈາກຄົວເຮືອນລາຍໄດ້ຕໍ່າ ມີເພີ່ມສູງຂຶ້ນ. ປະມານ 7% ຂອງຄົວເຮືອນທີ່ມີລາຍໄດ້ຕໍ່າ ໄດ້ແຈ້ງໃຫ້ຮູ້ວ່າ: ລູກຫຼານໃນໄວຮຽນຕ້ອງໄດ້ປະລະການຮຽນໃນໄລຍະ 12 ເດືອນຜ່ານມາ. ໃນຂະນະທີ່ການປະລະການຮຽນເກີດຂຶ້ນ 2,7 ສ່ວນຮ້ອຍຂອງກຸ່ມຄົວເຮືອນທີ່ມີຖານະ. ຫຼາຍກວ່າ 70% ຂອງຄົວເຮືອນເຫຼົ່ານັ້ນ ໃຫ້ເຫດຜົນຕໍ່ການຕັດສິນໃຈດັ່ງກ່າວວ່າ ເປັນຍ້ອນຂາດຄວາມສາມາດໃນການແບກຮັບຄ່າໃຊ້ຈ່າຍເພື່ອໃຫ້ລູກຫຼາຍໄປໂຮງຮຽນ ຫຼື ຍ້ອນຄວາມຈຳເປັນຕ້ອງໃຫ້ລູກຫຼານອອກມາຊ່ວຍເຮັດວຽກເພີ່ມໃນຄອບຄົວ.
- ການຄ້ຳປະກັນສະບຽງອາຫານຢູ່ລາວ ເຫັນວ່າ: ມີການປັບປຸງດີຂຶ້ນໃນຫົກເດືອນທ້າຍປີ 2022 ແຕ່ການປັບປຸງດັ່ງກ່າວພັດພົບວ່າ: ບໍ່ພົ້ນເດັ່ນໃນກຸ່ມຄົວເຮືອນລາຍໄດ້ຕໍ່າ ແລະກຸ່ມຄົວເຮືອນໃນເຂດຕົວເມືອງ. ສັດສ່ວນຄົວເຮືອນ ທີ່ປະເຊີນບັນຫາຂາດການຄ້ຳປະກັນສະບຽງອາຫານໃນລະດັບປານກາງ ເຖິງ ຂັ້ນຮ້າຍແຮງ ພົບວ່າ: ມີເພີ່ມສູງຂຶ້ນ ຫຼື ຢູ່ໃນລະດັບບໍ່ປ່ຽນແປງ ໃນກໍລະນີກຸ່ມຄົວເຮືອນໃນເຂດຕົວເມືອງ ແລະ ກຸ່ມຄົວເຮືອນທີ່ມີລາຍໄດ້ຕໍ່າ. ຄວາມກັງວົນກ່ຽວບັນຫາຂາດການຄ້ຳປະກັນສະບຽງຫາອານ ພົບວ່າ: ຫຼຸດລົງ ຍົກເວັ້ນໃນກໍລະນີກຸ່ມຄົວເຮືອນທີ່ມີລາຍໄດ້ຕໍ່າ.
- ເກືອບໝົດທຸກຄົວເຮືອນ ແມ່ນສາມາດເຂົ້າເຖິງການບໍລິການເບິ່ງແຍງສຸຂະພາບແລະການບໍລິການຕ່າງໆຂອງລັດ.
- 90% ຂອງຜູ້ຕອບສຳພາດ ໄດ້ກ່າວເຖິງ ບັນຫາເງິນເຟີ້ ແລະ ການອ່ອນຄ່າຂອງເງິນກີບ ວ່າເປັນ: ບັນຫາທີ່ຮີບດ່ວນ*ສຸດ* ເຊິ່ງລັດຖະບານ ຄວນຕ້ອງແກ້ໄຂເປັນສິ່ງທຳອິດ.

[1] ສ່ວນລຸ່ມ 40 ໝາຍເຖິງສ່ວນບຸກຄົນໃນສ່ວນລຸ່ມ 40 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້. ສ່ວນເທິງ 60 ໝາຍເຖິງສ່ວນບຸກຄົນໃນສ່ວນເທິງ 60 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້.

ການມີວຽກເຮັດງານທຳ

**ການມີວຽກເຮັດງານທຳມີການປັບຕົວດີຂຶ້ນໜ້ອຍໜຶ່ງໃນຫົກເດືອນທ້າຍປີ2022 ໂດຍມີຜູ້ອອກແຮງງານເຄື່ອນຍ້າຍຈາກຂະແໜງການກະສິກຳ ໄປສູ່ ຂະແໜງການບໍລິການ**. ສ່ວນແບ່ງຜູ້ຕອບສຳພາດ ທີ່ໄດ້ລາຍງານວ່າ: ຕົນເອງມີວຽກເຮັດງານທຳ ໃນໄລຍະຮອບການສຳຫຼວດຄັ້ງເດືອນທັນວາ/ມັງກອນ 2022-23 ກວມເອົາ 89,6 ສ່ວນຮ້ອຍ ເຊິ່ງເຫັນວ່າ ເພີ່ມຂຶ້ນເລັກນ້ອຍ ຈາກຕົວເລກ 88,2 ສ່ວນຮ້ອຍໃນຮອບການສຳຫຼວດຄັ້ງເດືອນເມສາ/ພຶດສະພາ 2022 (ຕາຕະລາງ 1). ການມີວຽກເຮັດງານທຳ ທີ່ເຄື່ອນຍ້າຍຈາກຂະແໜງການກະສິກຳ ໄປສູ່ ຂະແໜງການບໍລິການ ຖືເປັນການສ່ອງແສງໃຫ້ເຫັນການຟື້ນຕົວຂອງຂະແໜງການບໍລິການ ພາຍຫຼັງການເປີດຊາຍແດນຄືນໃໝ່ໃນເດືອນພຶດສະພາ 2022 ແລະ ການເດີນທາງເຂົ້າມາຂອງນັກທ່ອງທ່ຽວ ຈົນຮອດໄລຍະທ້າຍປີ 2022. ສ່ວນແບ່ງຂອງຜູ້ຕອບສຳພາດ ທີ່ມີວຽກເຮັດງານທຳໃນຂະແໜງການກະສິກຳ ເຫັນວ່າ: ຫຼຸດລົງຈາກ 43,5 ສ່ວນຮ້ອຍ ມາຢູ່ທີ່ 39,1 ສ່ວນຮ້ອຍ. ໃນຂະນະທີ່ ສ່ວນແບ່ງຂອງຜູ້ຕອບສຳພາດ ທີ່ເຮັດວຽກໃນຂະແໜງການຄ້າ, ຂົນສົ່ງ, ບໍລິການນັກທ່ອງທ່ຽວ ແລະ ຂະແໜງບໍລິການອື່ນໆ ພົບວ່າ ເພີ່ມສູງຂຶ້ນ (ຕາຕະລາງ 2).

ຕາຕະລາງ 1. ສະຖານະພາບການມີວຽກເຮັດງານທຳ (% ຂອງຜູ້ຕອບສຳພາດ)

| | ຄັ້ງເດືອນເມສາ/ພຶດສະພາ 2022 | | ຄັ້ງເດືອນທັນວາ 2022/ມັງກອນ 2023 | |
|---|---|---|---|---|
| | ມີວຽກເຮັດງານທຳ | ບໍ່ມີວຽກເຮັດງານທຳ | ມີວຽກເຮັດງານທຳ | ບໍ່ມີວຽກເຮັດງານທຳ |
| ຄົວເຮືອນທັງໝົດ | 88,2 | 11,8 | 89,6 | 10,4 |
| ຜູ້ຊາຍເປັນຫົວໜ້າຄອບຄົວ | 90,4 | 9,6 | 92,5 | 7,5 |
| ແມ່ຍິງເປັນຫົວໜ້າຄອບຄົວ | 84,2 | 15,8 | 84,5 | 15,5 |
| ເຂດຕົວເມືອງ | 88,2 | 11,8 | 86,7 | 13,3 |
| ເຂດຊົນນະບົດ | 88,1 | 11,9 | 91,1 | 8,9 |
| ສີມືແຮງງານສູງ | 90,1 | 9,9 | 89,9 | 10,1 |
| ສີມືແຮງງານຕໍ່າ | 81,6 | 18,4 | 89,1 | 10,9 |
| ສ່ວນເທິງ 60 | 88,8 | 11,2 | 89,7 | 10,3 |
| ສ່ວນລຸ່ມ 40 | 86,8 | 13,2 | 89,2 | 10,8 |

ໝາຍເຫດ: ຕົວເລກ ໄດ້ຜ່ານການຄຳນວນໂດຍອີງໃສ່ສູດຖ່ວງນໍ້າໜັກ. ຜູ້ຕອບສຳພາດ ມີອາຍຸແຕ່ 18 ປີຂຶ້ນໄປ. ຜູ້ມີວຽກເຮັດງານທຳ ແມ່ນຜູ້ທີ່ເຮັດວຽກຢ່າງໜ້ອຍໜຶ່ງຊົ່ວໂມງ ໃນໄລຍະເຈັດມື້ກ່ອນວັນທີສຳພາດ. ຕົວເລກສຳລັບໄລຍະການສຳຫຼວດຄັ້ງເດືອນເມສາ/ພຶດສະພາ 2022 ແມ່ນໄດ້ຈາກຂໍ້ມູນການສຳພາດໃນຮອບທີ 5. ແຮງງານທີ່ມີສີມື ແມ່ນຜູ້ອອກແຮງງານທີ່ຈົບຊັ້ນມັດທະຍົມສຶກສາເປັນຢ່າງຕໍ່າ. ສ່ວນລຸ່ມ 40 ໝາຍເຖິງສ່ວນບຸກຄົນໃນສ່ວນລຸ່ມ 40 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້. ສ່ວນເທິງ 60 ໝາຍເຖິງສ່ວນບຸກຄົນໃນສ່ວນເທິງ 60 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້.

ຕາຕະລາງ 2. ຂະແໜງທີ່ຈ້າງງານ (% ຂອງຜູ້ຕອບສຳພາດທີ່ມີວຽກເຮັດງານທຳ)

| | ຄັ້ງເດືອນເມສາ/ພຶດສະພາ 2022 | ຄັ້ງເດືອນທັນວາ 2022/ມັງກອນ 2023 |
|---|---|---|
| ກະສິກຳ | 43,5 | 39,1 |
| ອຸດສາຫະກຳ | 4,7 | 4,9 |
| ກໍ່ສ້າງ | 3,6 | 3,5 |
| ຂົນສົ່ງ, ການຄ້າ ແລະ ບໍລິການນັກທ່ອງທ່ຽວ | 14,4 | 16,1 |
| ຂະແໜງການອື່ນໆ | 33,8 | 36,5 |

ໝາຍເຫດ: ຕົວເລກ ໄດ້ຜ່ານການຄຳນວນໂດຍອີງໃສ່ສູດຖ່ວງນໍ້າໜັກ. ຂະແໜງການອື່ນໆໄດ້ລວມເອົາຂະແໜງບໍລິການອື່ນໆ ເຊັ່ນ: ບໍລິການສາທາລະນະ, ສາທາລະນະສຸກ, ສຶກສາ ແລະ ບໍລິການການເງິນ. ຕົວເລກສຳລັບໄລຍະການສຳຫຼວດຄັ້ງເດືອນເມສາ/ພຶດສະພາ 2022 ແມ່ນໄດ້ຈາກຂໍ້ມູນຄຳຕອບຕໍ່ຊຸດຄຳຖາມດຽວກັນ ທີ່ນຳໃຊ້ກັບການສຳຫຼວດໃນຮອບທີ 6.

ຕາຕະລາງ 3. ປະເພດການມີວຽກເຮັດງານທຳ (% ຂອງຜູ້ຕອບສຳພາດທີ່ມີວຽກເຮັດງານທຳ)

| | ຄັ້ງເດືອນເມສາ/ພຶດສະພາ 2022 | ຄັ້ງເດືອນທັນວາ 2022/ມັງກອນ 2023 |
|---|---|---|
| ຜູ້ອອກແຮງງານທີ່ໄດ້ຮັບຄ່າຕອບແທນແຮງງານໃນຂະແໜງເສດຖະກິດໃນລະບົບ | 29,9 | 30,7 |
| ຜູ້ອອກແຮງງານທີ່ໄດ້ຮັບຄ່າຕອບແທນແຮງງານໃນຂະແໜງເສດຖະກິດນອກລະບົບ | 13,8 | 14,1 |
| ຜູ້ອອກແຮງງານທີ່ປະກອບອາຊີບດ້ວຍຕົນເອງ | 27,6 | 29,2 |
| ຜູ້ອອກແຮງງານໃຫ້ຄອບຄົວໂດຍບໍ່ໄດ້ຮັບຄ່າຕອບແທນແຮງງານ | 28,8 | 26,0 |

ໝາຍເຫດ: ຕົວເລກ ໄດ້ຜ່ານການຄານວນໂດຍອີງໃສ່ສູດຖ່ວງນໍ້າໜັກ. ຕົວເລກສຳລັບໄລຍະການສຳຫຼວດຄັ້ງເດືອນເມສາ/ພຶດສະພາ 2022 ແມ່ນໄດ້ຈາກຂໍ້ມູນຄຳຕອບຕໍ່ຊຸດຄຳຖາມດຽວກັນ ທີ່ນຳໃຊ້ກັບການສຳຫຼວດໃນຮອບທີ 6.

**ການເຄື່ອນຍ້າຍແຮງງານລະຫວ່າງຂະແໜງການ ແມ່ນພົວພັນກັບກໍລະນີທີ່ ຜູ້ອອກແຮງງານໃຫ້ຄອບຄົວໂດຍບໍ່ໄດ້ຮັບຄ່າຕອບແທນແຮງງານ ຫັນໄປເຮັດວຽກທີ່ໄດ້ຮັບຄ່າຕອບແທນແຮງງານ.** ລະຫວ່າງໄລຍະການສຳຫຼວດຄັ້ງເດືອນເມສາ/ພຶດສະ ພາ 2022 ຫາ ໄລຍະການສຳຫຼວດຄັ້ງເດືອນທັນວາ/ມັງກອນ 2022-23, ໃນຈຳນວນຜູ້ຕອບສຳພາດທີ່ມີວຽກ

ເຮັດງານທຳທັງໝົດ ພົບວ່າ ສ່ວນແບ່ງຂອງຜູ້ອອກແຮງງານໃຫ້ຄອບຄົວໂດຍບໍ່ໄດ້ຮັບຄ່າຕອບແທນແຮງງານ ຫຼຸດລົງຈາກ 28,8 ສ່ວນຮ້ອຍ ມາເປັນ 26,0 ສ່ວນຮ້ອຍ, ໃນຂະນະທີ່ສ່ວນແບ່ງຂອງຜູ້ອອກແຮງງານທີ່ໄດ້ຮັບຄ່າຕອບແທນແຮງງານ ເພີ່ມສູງຂຶ້ນ (ຕາຕະລາງ 3). ຜູ້ອອກແຮງງານທີ່ໄດ້ຮັບຄ່າຕອບແທນແຮງງານໃນຂະແໜງເສດຖະກິດນອກລະບົບໃນໄລຍະການສຳຫຼວດຄັ້ງເດືອນເມສາ/ພຶດສະພາ 2022 (ຈຳນວນໜຶ່ງແມ່ນເຮັດວຽກໃນຂະແໜງກໍ່ສ້າງ) ແຈ້ງວ່າ: ໄດ້ປ່ຽນໄປເຮັດວຽກໃຫ້ຄອບຄົວໂດຍບໍ່ມີຄ່າຕອບແທນແຮງງານ ຫຼື ໄດ້ເຊົາເຮັດວຽກ ໃນໄລຍະການສຳຫຼວດຄັ້ງເດືອນທັນວາ/ມັງ ກອນ 2022-23. ວຽກໃນຂະແໜງເສດຖະກິດໃນລະບົບ ສະແດງໃຫ້ເຫັນວ່າ: ມີລະດັບຄວາມໝັ້ນຄົງ ໃນຊ່ວງໄລຍະເວລາການສຳຫຼວດໃນຮອບທີ 6, ເນື່ອງຈາກວ່າ 90 ສ່ວນຮ້ອຍຂອງຜູ້ອອກແຮງງານທີ່ໄດ້ຮັບຄ່າຕອບແທນແຮງງານໃນຂະແໜງເສດຖະກິດໃນລະບົບ ຍັງຄົງຮັກສາສະຖານະພາບການມີວຽກເຮັດງານທຳຂອງຕົນ.

**ຜູ້ອອກແຮງງານທີ່ມີສີມືແຮງງານຕ່ຳ ແລະ ຜູ້ອອກແຮງງານໃນເຂດຊົນນະບົດ ໄດ້ຮັບຜົນປະໂຫຍດຈາກການຟື້ນຕົວຂອງຕະຫຼາດແຮງງານໃນໄລຍະຫົກເດືອນທ້າຍປີ 2022.** ຜູ້ອອກແຮງງານທີ່ມີສີມືແຮງງານຕ່ຳ ເພີ່ມຂຶ້ນ 7,5 ຈຸດສ່ວນຮ້ອຍໃນຈຳນວນສ່ວນແບ່ງຂອງຜູ້ຕອບສຳພາດທີ່ມີວຽກເຮັດງານທຳ. ສ່ວນແບ່ງຂອງຜູ້ອອກແຮງງານທີ່ມີສີມືແຮງງານສູງ ພົບວ່າ: ບໍ່ມີການປ່ຽນແປງ. ສ່ວນແບ່ງຂອງຜູ້ຕອບສຳພາດໃນເຂດຊົນນະບົດທີ່ລາຍງານວ່າມີວຽກເຮັດງານທຳ ເພີ່ມຂຶ້ນ 3 ຈຸດສ່ວນຮ້ອຍ. ໃນຂະນະທີ່ສ່ວນແບ່ງຜູ້ຕອບສຳພາດໃນເຂດຕົວເມືອງລາຍງານວ່າມີວຽກເຮັດງານທຳ ຫຼຸດລົງ 1,5 ຈຸດສ່ວນຮ້ອຍ. ຄວາມແຕກຕ່າງລະຫວ່າງຈຳນວນຜູ້ອອກແຮງງານເພດຍິງ ແລະ ເພດຊາຍ ແລະ ກຸ່ມລາຍໄດ້ຕ່າງໆ ເຫັນວ່າ: ບໍ່ມີການປ່ຽນແປງຫຍັງຫຼາຍ ໂດຍທີ່ຜູ້ອອກແຮງງານເພດຊາຍ ແລະ ຜູ້ອອກແຮງງານທີ່ມີລາຍໄດ້ຕ່ຳ ມີສັດສ່ວນສູງກວ່າເລັກນ້ອຍ.

**ລາຍໄດ້ຈາກການອອກແຮງງານ ເຫັນວ່າ: ດີຂຶ້ນ ແລະ ສ່ວນແບ່ງຂອງຜູ້ອອກແຮງງານ ທີ່ຕ້ອງເຮັດວຽກທີສອງເພີ່ມຈາກວຽກທີ່ຕົນເຮັດຢູ່ ພົບວ່າ: ຫຼຸດລົງ.** ຫຼາຍກວ່າໜຶ່ງສ່ວນສາມຂອງຜູ້ຕອບສຳພາດທີ່ມີວຽກເຮັດງານທຳ ແຈ້ງໃຫ້ຮູ້ວ່າ: ລາຍໄດ້ຈາກການອອກແຮງງານຂອງເຂົາເຈົ້າ ເພີ່ມສູງຂຶ້ນ ໃນລະຫວ່າງໄລຍະການສຳຫຼວດຄັ້ງເດືອນເມສາ/ພຶດສະພາ 2022 ຫາ ຄັ້ງເດືອນທັນວາ/ມັງກອນ 2022-23, ພ້ອມນັ້ນ 40,8 ສ່ວນຮ້ອຍ ແຈ້ງວ່າ: ລາຍໄດ້ຈາກການອອກແຮງງານຂອງເຂົາເຈົ້າ ແມ່ນຢູ່ໃນລະດັບຄົງທີ່ (ຕາຕະລາງ 4). ການເພີ່ມຂຶ້ນຂອງລາຍໄດ້ ພົບວ່າ: ພົວພັນກັບການຫຼຸດລົງຂອງສ່ວນແບ່ງຜູ້ຕອບສຳພາດທີ່ມີວຽກເຮັດງານທຳ ເຊິ່ງຕ້ອງເຮັດວຽກທີສອງຕື່ມຈາກວຽກທີ່ຕົນເຮັດຢູ່ ເພື່ອຫາລາຍໄດ້ເພີ່ມ. ຄືດັ່ງຕົວເລກຂອງຜູ້ທີ່ມີວຽກເຮັດງານທຳ ພົບວ່າ: ສ່ວນແບ່ງຂອງຜູ້ອອກແຮງງານເພດຊາຍ, ຜູ້ອອກແຮງງານໃນເຂດຊົນນະບົດ ແລະ ຜູ້ອອກແຮງງານທີ່ມີສີມືແຮງງານຕ່ຳ ມີລາຍໄດ້ເພີ່ມຂຶ້ນຈາກການອອກແຮງງານ ນັ້ນມີສູງກວ່າ ສ່ວນແບ່ງຜູ້ອອກແຮງງານເພດຍິງ, ຜູ້ອອກແຮງງານໃນເຂດຕົວເມືອງ ແລະ ຜູ້ອອກແຮງງານທີ່ມີສີມືແຮງງານສູງ. ຄວາມແຕກຕ່າງດັ່ງກ່າວ ເຫັນວ່າ: ຄ່ອນຂ້າງສູງ ສຳລັບຜູ້ອອກແຮງງານໃນເຂດຊົນນະບົດ ແລະ ຜູ້ອອກແຮງງານທີ່ມີສີມືແຮງງານຕ່ຳ ຄື: ສ່ວນແບ່ງຂອງຜູ້ອອກແຮງງານ ທີ່ແຈ້ງວ່າມີລາຍໄດ້ຈາກການອອກແຮງານເພີ່ມຂຶ້ນ ມີຕົວເລກຄື: 38,1 ສ່ວນຮ້ອຍ ສຳລັບຜູ້ອອກແຮງງານໃນເຂດຊົນນະບົດ ເມື່ອທຽບໃສ່ 29,8 ສ່ວນຮ້ອຍ ຂອງຜູ້ອອກແຮງງານໃນເຂດຕົວເມືອງ, ແລະ 43 ສ່ວນຮ້ອຍສຳລັບຜູ້ອອກແຮງງານທີ່ມີສີມືແຮງງານຕ່ຳ ເມື່ອທຽບໃສ່ 30,2 ສ່ວນຮ້ອຍຂອງຜູ້ອອກແຮງງານທີ່ມີສີມືແຮງງານສູງ. ໃນເວລາດຽວກັນ, ພົບວ່າ: ມີຄວາມເປັນໄດ້ສູງ ທີ່ຜູ້ອອກແຮງງານໃນເຂດຊົນນະບົດ ແລະ ຜູ້ອອກແຮງງານທີ່ມີສີມືແຮງງານຕ່ຳ ຈະປະເຊີນກັບສະພາບການຫຼຸດລົງຂອງລາຍໄດ້ຈາກການອອກແຮງງານ ເຊິ່ງເປັນການສະແດງໃຫ້ເຫັນວ່າ: ລາຍໄດ້ຈາກການອອກແຮງງານ ມີການສັ່ນໄຫວສູງໃນກຸ່ມຜູ້ອອກແຮງງານເຫຼົ່ານີ້.

ຕາຕະລາງ 4. ລາຍໄດ້ຈາກການອອກແຮງງານ (% ຂອງຜູ້ຕອບສຳພາດທີ່ມີວຽກເຮັດງານທຳ)

| | ລາຍໄດ້ຈາກການອອກແຮງງານ ເມື່ອສົມທຽບໃສ່ໄລຍະການສຳຫຼວດຄັ້ງເດືອນເມສາ/ພຶດສະພາ 2022 | | | ສ່ວນແບ່ງຜູ້ຕອບສຳພາດທີ່ມີວຽກເຮັດງານທຳ ເຊິ່ງເຮັດວຽກທີສອງເພີ່ມຈາກວຽກທີ່ຕົນເຮັດຢູ່ | |
|---|---|---|---|---|---|
| | ເພີ່ມຂຶ້ນ | ບໍ່ປ່ຽນ | ຫຼຸດລົງ | ເມສາ/ພຶດສະພາ 2022 | ທັນວາ/ມັງກອນ 2022-23 |
| ຄົວເຮືອນທັງໝົດ | 35,3 | 40,8 | 23,9 | 50,5 | 45,9 |
| ຜູ້ຊາຍເປັນຫົວໜ້າຄອບຄົວ | 36,8 | 41,1 | 22,1 | 54,7 | 49,3 |
| ແມ່ຍິງເປັນຫົວໜ້າຄອບຄົວ | 32,5 | 40,3 | 27,2 | 42,9 | 39,5 |
| ເຂດຕົວເມືອງ | 29,8 | 48,6 | 21,6 | 38,9 | 36,7 |
| ເຂດຊົນນະບົດ | 38,1 | 36,8 | 25,1 | 56,3 | 50,6 |
| ມີສີມືແຮງງານສູງ | 30,2 | 46,8 | 23,0 | 52,2 | 48,3 |
| ມີສີມືແຮງງານຕ່ຳ | 43,0 | 31,6 | 25,3 | 47,8 | 42,2 |
| ສ່ວນເທິງ 60 | 34,8 | 40,7 | 24,6 | 50,4 | 45,6 |
| ສ່ວນລຸ່ມ 40 | 36,5 | 41,2 | 22,3 | 50,8 | 46,7 |

ໝາຍເຫດ: ຕົວເລກ ໄດ້ຜ່ານການຄຳນວນໂດຍອີງໃສ່ສູດຖ່ວງນ້ຳໜັກ. ຕົວເລກສຳລັບໄລຍະສຳຫຼວດຄັ້ງເດືອນເມສາ/ພຶດສະພາ 2022 ແມ່ນໄດ້ຈາກຂໍ້ມູນການສຳພາດອີງຕາມຄຳຖາມທີ່ຖາມຄືນໃນຮອບທີ 6. ຜູ້ອອກແຮງງານທີ່ມີສີມືແຮງງານສູງ ແມ່ນຜູ້ອອກແຮງງານທີ່ຈົບຊັ້ນມັດທະຍົມສຶກສາເປັນ. ສ່ວນລຸ່ມ 40 ໝາຍເຖິງສ່ວນບຸກຄົນໃນສ່ວນລຸ່ມ 40 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້. ສ່ວນເທິງ 60 ໝາຍເຖິງສ່ວນບຸກຄົນໃນສ່ວນເທິງ 60 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້.

## ຄົວເຮືອນທີ່ເຮັດການຜະລິດກະສິກຳ

**ປະມານ 10,5 ສ່ວນຮ້ອຍຂອງຄົວເຮືອນທີ່ເຮັດການຜະລິດກະສິກຳ ປະເຊີນກັບເຫດການລົບກວນຕໍ່ຂະບວນການຜະລິດໃນປີ 2022 ເຊິ່ງຈຸດໜັກແມ່ນຍ້ອນໄພພິບັດທຳມະຊາດ ແລະ ບັນຫາຂາດແຄນແຮງງານ (ຕາຕະລາງ 5).** ສ່ວນແບ່ງຂອງຄົວເຮືອນທີ່ເຮັດການຜະລິດກະສິກຳ ເພີ່ມຂຶ້ນຈາກ 73,4% ໃນລະຍະການສຳຫຼວດຄັ້ງເດືອນມິຖຸນາ/ກໍລະກົດ 2020 ມາເປັນ 87,0% ໃນໄລຍະການສຳຫຼວດຄັ້ງເດືອນທັນວາ/ມັງກອນ 2022-23 ໂດຍສ່ວນແບ່ງຂອງຄົວເຮືອນທີ່ເຮັດການຜະລິດກະສິກຳໃນເຂດຕົວເມືອງ ເພີ່ມຈາກ 52,5% ມາເປັນ 73,2%. ຕົວເລກດັ່ງກ່າວ ບອກໃຫ້ຮູ້ວ່າ: ຫຼາຍຄົວເຮືອນ ພາກັນເຮັດການຜະລິດກະສິກຳ ຫຼື ເຮັດການປູກຝັງເພື່ອສະໜອງສະບຽງອາຫານໃຫ້ຄອບຄົວຂອງຕົນ ໃນໄລຍະເກີດພະຍາດ ລະບາດໂຄວິດ 19 ຫຼື ໄລຍະທີ່ມີອັດຕາເງິນເຟີ້ສູງ. ໄພພິບັດທຳມະຊາດຕ່າງໆເຊັ່ນ: ນ້ຳຖ້ວມ ຫຼື ໄພແລ້ງ ຖືເປັນເຫດການລົບກວນອັນໃຫຍ່ຫຼວງ ຕໍ່ການຜະລິດກະສິກຳຂອງຄົວເຮືອນ ເວົ້າສະເພາະໃນເຂດຊົນນະບົດ ແລະ ໃນກຸ່ມຄົວເຮືອນຜະລິດກະສິກຳທີ່ມີລາຍໄດ້ຕ່ຳ. ບັນຫາຂາດແຄນແຮງງານ, ລາຄາປັດໄຈການຜະລິດກະສິກຳທີ່ເພີ່ມສູງຂຶ້ນ ແລະ ຄວາມບໍ່ສາມາດເຂົ້າເຖິງປັດໄຈການຜະລິດອື່ນໆ ເຫັນວ່າ: ພົ້ນເດັ່ນໃນເຂດຕົວເມືອງ ໃນຂະນະທີ່ບັນຫາຂາດແຄນແຫຼ່ງທຶນ ເປັນບັນຫາໃຫຍ່ໃນກຸ່ມຄົວເຮືອນຜະລິດກະສິກຳທີ່ມີລາຍໄດ້ຕ່ຳໃນເຂດຊົນນະບົດ. ຊາວກະສິກອນຈຳນວນໜຶ່ງ ເວົ້າສະເພາະໃນກຸ່ມຄົວເຮືອນຜະລິດກະສິກຳທີ່ມີລາຍໄດ້ສູງໃນເຂດຕົວເມືອງ ແຈ້ງວ່າ: ເຂົາເຈົ້າຢຸຕິການຜະລິດກະສິກຳ ຍ້ອນໄດ້ວຽກໃນຂະແໜງອື່ນ.

ຕາຕະລາງ 5. ຄົວເຮືອນທີ່ເຮັດການຜະລິດກະສິກຳ

| | | | % ຂອງຄົວເຮືອນທີ່ເຮັດການຜະລິດກະສິກຳ ທີ່ບໍ່ສາມາດເຮັດການຜະລິດປົກກະຕິ, ຕາມສິ່ງທ້າທາຍ | | | | | |
|---|---|---|---|---|---|---|---|---|
| | % ຂອງຄົວເຮືອນ ທີ່ເຮັດການຜະລິດກະສິກຳ | % ຄົວເຮືອນທີ່ເຮັດການຜະລິດກະສິກຳ ແຕ່ບໍ່ສາມາດເຮັດການຜະລິດປົກກະຕິ ນັບແຕ່ເດືອນມັງກອນ 2022 | ບໍ່ສາມາດຂາຍ/ຂົນສົ່ງຜົນຜະລິດ | ລາຄາ/ຄ່າຂົນສົ່ງ ປັດໃຈການຜະລິດ | ຂາດແຄນແຮງງານ | ຂາດແຄນເຄື່ອງກົນ | ໄພພິບັດ | ເຫດຜົນອື່ນໆ |
| ຄົວເຮືອນທັງໝົດ | 87,0 | 10,5 | 5,0 | 7,3 | 19,5 | 18,9 | 22,2 | 9,3 |
| ເຂດຕົວເມືອງ | 74,0 | 12,9 | 3,5 | 11,9 | 22,0 | 17,0 | 18,2 | 10,2 |
| ເຂດຊົນນະບົດ | 94,0 | 9,5 | 5,8 | 4,8 | 18,1 | 19,9 | 24,4 | 8,9 |
| ສ່ວນເທິງ 60 | 84,2 | 9,1 | 4,6 | 7,5 | 17,8 | 17,2 | 23,8 | 10,1 |
| ສ່ວນລຸ່ມ 40 | 93,6 | 13,3 | 5,4 | 7,1 | 22,0 | 21,2 | 19,9 | 8,2 |

ໝາຍເຫດ: ຕົວເລກ ໄດ້ຜ່ານການຄຳນວນໂດຍອີງໃສ່ສູດຖ່ວງນ້ຳໜັກ. ສ່ວນລຸ່ມ 40 ໝາຍເຖິງສ່ວນບຸກຄົນໃນສ່ວນລຸ່ມ 40 ຂອງການກະຈາຍດ້ານການຊົມໃຊ້. ສ່ວນເທິງ 60 ໝາຍເຖິງສ່ວນບຸກຄົນໃນສ່ວນເທິງ 60 ຂອງການກະຈາຍດ້ານການຊົມໃຊ້. ສ່ວນແບ່ງຄົວເຮືອນໃນເຂດຕົວເມືອງທີ່ເຮັດການຜະລິດກະສິກຳ ພົບວ່າ: ຄ່ອຍໆເພີ່ມຂຶ້ນຈາກ 52,5% ໃນການສຳຫຼວດຮອບທີ 1 ມາເປັນ 67,5% ໃນຮອບທີ 5, ແລະ 74,0% ໃນຮອບທີ 6.

## ທຸລະກິດຄອບຄົວ

**ລາຍຮັບຈາກທຸລະກິດຄອບຄົວ ເຫັນວ່າ: ມີການປັບປຸງດີຂຶ້ນໃນປີ 2022.** ພົບວ່າ: ເກືອບ 40 ສ່ວນຮ້ອຍຂອງຄົວເຮືອນທັງໝົດ ດຳເນີນທຸລະກິດຄອບຄົວໃນປີ 2022 ເຊິ່ງໃນນັ້ນ 40% ແມ່ນເຄື່ອນໄຫວທຸລະກິດໃນຂະແໜງການກະສິກຳ ແລະ ອີກ 42,3% ເຮັດທຸລະກິດໃນຂະແໜງການຄ້າ, ຂົນສົ່ງ ແລະ ຂະແໜງການບໍລິການນັກທ່ອງທ່ຽວ. ໃນໄລຍະການສຳຫຼວດຄັ້ງເດືອນທັນວາ/ມັງກອນ 2022-2023, ທຸລະກິດຄອບຄົວຫຼາຍກວ່າເຄິ່ງໜຶ່ງ (56,2%) ລາຍງານວ່າ: ມີລາຍຮັບສູງຂຶ້ນ ເມື່ອທຽບໃສ່ໄລຍະເວລາດຽວກັນຂອງປີກາຍ ແລະ ມີພຽງ 25,1% ທີ່ປະເຊີນກັບສະພາບການທີ່ມີລາຍໄດ້ຫຼຸດລົງ (ຕາຕະລາງ 6). ເກືອບສອງສ່ວນສາມຂອງຈຳນວນທຸລະກິດທັງໝົດ ເຫັນລາຍໄດ້ຂອງຕົນກັບຄືນມາໃນລະດັບເກົ່າ ຫຼື ສູງລື່ນລະດັບທີ່ເຄີຍຫາໄດ້ກ່ອນເກີດພະຍາດລະບາດ ເຊິ່ງມີການປັບຕົວດີຂຶ້ນໃນລະດັບ 18,4 ຈຸດເປີເຊັນ ນັບແຕ່ໄລຍະການສຳຫຼວດຄັ້ງເດືອນເມສາ/ພຶດສະພາ 2022.

**ລາຍຮັບທີ່ປັບຕົວດີຂຶ້ນ ເຫັນໄດ້ເດັ່ນຊັດສຳລັບທຸລະກິດໃນຂະແໜງການກະສິກຳ ເຊິ່ງຖືເປັນການສ້າງຜົນປະໂຫຍດໃຫ້ຄົວເຮືອນລາຍໄດ້ຕ່ຳ ແລະ ກຸ່ມຄົວເຮືອນໃນເຂດຊົນນະບົດ.** ໃນຈຳນວນຄົວເຮືອນທີ່ຕອບສຳພາດ ພົບວ່າ: ອັດຕາສ່ວນທຸລະກິດຄອບຄົວ ທີ່ມີລາຍຮັບເພີ່ມຂຶ້ນໃນປີ 2022 ແລະ ສູງກວ່າລະດັບທີ່ເຄີຍຫາໄດ້ໃນໄລຍະກ່ອນເກີດພະຍາດລະບາດ ສ່ວນຫຼາຍແມ່ນທຸລະກິດຄອບຄົວຂອງຄົວເຮືອນທີ່ມີລາຍໄດ້ຕ່ຳ ແລະ ຄົວເຮືອນໃນເຂດຊົນນະບົດ ກໍ່ຄືທຸລະກິດຄອບຄົວ ທີ່ຜູ້ຊາຍເປັນເຈົ້າຂອງ ຫຼື ບໍລິຫານທຸລະກິດ. ທຸລະກິດຄອບຄົວເຫຼົ່ານີ້ ສ່ວນໃຫຍ່ ແມ່ນເຄື່ອນໄຫວທຸລະກິດໃນຂະແໜງກະສິກຳ ເຊິ່ງເປັນຂະແໜງທີ່ສະແດງໃຫ້ເຫັນສັນຍານການຟື້ນຕົວໃນຕົ້ນປີ 2022. ສອງສ່ວນສາມຂອງທຸລະກິດໃນຂະແໜງກະສິກຳ ເຫັນລາຍໄດ້ຂອງຕົນເພີ່ມສູງຂຶ້ນໃນປີ 2022 ເຊິ່ງເປັນການສະທ້ອນໃຫ້ເຫັນການເພີ່ມຂຶ້ນຂອງກິດຈະກຳຜະລິດກະສິກຳໃນໄລຍະລະດູການປູກຝັງໃນລະຫວ່າງເດືອນມິຖຸນາ ເຖິງ ພະຈິກ 2022 ເມື່ອສົມທຽບໃສ່ໄລຍະເວລາດຽວກັນຂອງປີ 2021. ຫາກສົມທຽບການຟື້ນຕົວຂອງທຸລະກິດຄອບຄົວລະຫວ່າງຂະແໜງ ການໃສ່ກັນແລ້ວ ອີງຕາມຕົວເລກໃນທ້າຍປີ 2022 ເຫັນວ່າ: ທຸລະກິດຄອບຄົວໃນຂະແໜງການບໍລິການ ມີການຟື້ນຕົວທີ່

ເຂັ້ມແຂງກວ່າ. ໃນຂະນະທີ່ປະມານເຄິ່ງໜຶ່ງຂອງທຸລະກິດຄອບຄົວທີ່ເຄື່ອນໄຫວທຸລະກິດໃນຂະແໜງການຄ້າ, ຂົນສົ່ງ, ບໍລິການນັກທ່ອງທ່ຽວ ກໍລ້ວນແຕ່ເຫັນລາຍຮັບຂອງຕົນເພີ່ມຂຶ້ນໃນປີ 2022.

ຕາຕະລາງ 6. ທຸລະກິດຄອບຄົວ

| | % ຂອງຄົວເຮືອນທີ່ມີທຸລະກິດຄອບຄົວ | ລາຍຮັບຂອງເດືອນປະຈຸບັນ ທຽບໃສ່ປີກາຍ (% ຂອງທຸລະກິດຄອບຄົວໃນເງື່ອນໄຂການສຳຫຼວດ) | | | ລາຍຮັບຂອງເດືອນປະຈຸບັນ ທຽບໃສ່ໄລຍະກ່ອນໂຄວິດ (% ຂອງທຸລະກິດຄອບຄົວໃນເງື່ອນໄຂການສຳຫຼວດ) | | |
|---|---|---|---|---|---|---|---|
| | | ລື່ນເກົ່າ | ຄືເກົ່າ | ຫຼຸດເກົ່າ | ລື່ນເກົ່າ | ຄືເກົ່າ | ຫຼຸດເກົ່າ |
| ຄົວເຮືອນທັງໝົດ | 39,7 | 56,2 | 18,7 | 25,1 | 48,6 | 16,2 | 35,2 |
| ເຂດຕົວເມືອງ | 39,5 | 53,5 | 19,9 | 26,7 | 39,4 | 15,9 | 44,7 |
| ເຂດຊົນນະບົດ | 39,8 | 57,7 | 18,1 | 24,2 | 53,0 | 16,4 | 30,6 |
| ສ່ວນເທິງ 60 | 45,3 | 53,9 | 18,4 | 27,7 | 46,3 | 14,9 | 38,8 |
| ສ່ວນລຸ່ມ 40 | 26,9 | 65,1 | 19,8 | 15,0 | 58,1 | 21,6 | 20,3 |
| ຜູ້ຊາຍບໍລິຫານ | | 59,2 | 17,6 | 23,1 | 51,0 | 17,2 | 31,8 |
| ແມ່ຍິງບໍລິຫານ | | 52,3 | 20,1 | 27,6 | 45,5 | 15,0 | 39,5 |

ໝາຍເຫດ: ທຸລະກິດຄອບຄົວໃນເງື່ອນໄຂການສຳຫຼວດ ແມ່ນທຸລະກິດຄອບຄົວ ທີ່ເລີ່ມເຄື່ອນໄຫວທຸລະກິດກ່ອນປີກາຍ ແລະ ກ່ອນໄລຍະເກີດພະຍາດລະບາດໂຄວິດ. ຕົວເລກ ໄດ້ຜ່ານການຄຳນວນໂດຍອີງໃສ່ສູດຖ່ວງນ້ຳໜັກ. ສ່ວນລຸ່ມ 40 ໝາຍເຖິງສ່ວນບຸກຄົນໃນສ່ວນລຸ່ມ 40 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້. ສ່ວນເທິງ 60 ໝາຍເຖິງສ່ວນບຸກຄົນໃນສ່ວນເທິງ 60 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້.

ລາຍໄດ້ຂອງຄົວເຮືອນ

**ສ່ວນແບ່ງຂອງຄົວເຮືອນ ທີ່ລາຍງານການສູນເສຍລາຍໄດ້ ອັນເປັນຜົນເນື່ອງມາຈາກພະຍາດລະບາດໂຄວິດ ເຫັນວ່າ: ສືບຕໍ່ຫຼຸດລົງ.** ໃນໄລຍະການສຳຫຼວດຄັ້ງເດືອນເມສາ/ພຶດສະພາ 2022, ມີ 43,4% ຂອງຄົວເຮືອນ ທີ່ລາຍງານການສູນເສຍລາຍໄດ້ ຍ້ອນຜົນກະທົບຈາກພະຍາດລະບາດ ເຊິ່ງໃນນັ້ນ 21% ແຈ້ງໃຫ້ຮູ້ວ່າ: ລາຍໄດ້ຄົວເຮືອນຂອງຕົນ ຫຼຸດລົງກາຍເຄິ່ງ. ແຕ່ຕົວເລກເຫຼົ່ານີ້ ໄດ້ຫຼຸດລົງມາຢູ່ທີ່ 35,1% ແລະ 16,3% ຕາມລຳດັບ ໃນໄລຍະການສຳຫຼວດຄັ້ງເດືອນທັນວາ/ມັງກອນ 2022-23 (ຕາຕະລາງ 7). ຄົວເຮືອນໃນເຂດຊົນນະບົດ ແລະ ຄົວເຮືອນທີ່ມີລາຍໄດ້ຕ່ຳ ພົບວ່າ: ມີການຟື້ນຕົວທີ່ເຂັ້ມແຂງດ້ານລາຍໄດ້ຂອງຄົວເຮືອນ. ສ່ວນແບ່ງຄົວເຮືອນທີ່ປະເຊີນກັບສະພາບລາຍໄດ້ຫຼຸດລົງຫຼາຍກວ່າເຄິ່ງເຫັນວ່າ: ມີຕົວເລກຫຼຸດລົງຫຼາຍ ໃນກຸ່ມຄົວເຮືອນໃນເຂດຊົນນະບົດ ແລະ ຄົວເຮືອນທີ່ມີລາຍໄດ້ຕ່ຳ.

ຕາຕະລາງ 7. ຕົວເລກການຫຼຸດລົງຂອງລາຍໄດ້ທັງໝົດຂອງຄົວເຮືອນ

| | ໄລຍະການສຳຫຼວດຄັ້ງເດືອນເມສາ/ພຶດສະພາ 2022 ທຽບໃສ່ໄລຍະກ່ອນເກີດພະຍາດລະບາດໂຄວິດ | | ໄລຍະການສຳຫຼວດຄັ້ງເດືອນທັນວາ /ມັງກອນ 2022 -23 ທຽບໃສ່ໄລຍະກ່ອນເກີດພະຍາດລະບາດໂຄວິດ | | ໄລຍະການສຳຫຼວດຄັ້ງເດືອນທັນວາ/ມັງກອນ 2022 -23 ທຽບໃສ່ໄລຍະເວລາດຽວກັນຂອງປີກາຍ | |
|---|---|---|---|---|---|---|
| | ໜ້ອຍກວ່າເຄິ່ງ | ຫຼາຍກວ່າເຄິ່ງ | ໜ້ອຍກວ່າເຄິ່ງ | ຫຼາຍກວ່າເຄິ່ງ | ໜ້ອຍກວ່າເຄິ່ງ | ຫຼາຍກວ່າເຄິ່ງ |
| ຄົວເຮືອນທັງໝົດ | 22,3 | 21,1 | 18,8 | 16,3 | 19,5 | 13,2 |
| ເຂດໃນເມືອງ | 22,7 | 20,6 | 17,7 | 17,3 | 16,9 | 15,4 |
| ເຂດຊົນນະບົດ | 22,1 | 21,4 | 19,4 | 15,8 | 20,8 | 12,1 |
| ສ່ວນເທິງ 60 | 23 | 20,2 | 19,0 | 16,0 | 19,3 | 12,6 |
| ສ່ວນລຸ່ມ 40 | 20,8 | 23,1 | 18,3 | 17,1 | 19,9 | 14,7 |

ໝາຍເຫດ: ຕົວເລກ ໄດ້ຜ່ານການຄຳນວນໂດຍອີງໃສ່ສູດຖ່ວງນ້ຳໜັກ. ສ່ວນລຸ່ມ 40 ໝາຍເຖິງສ່ວນບຸກຄົນໃນສ່ວນລຸ່ມ 40 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້. ສ່ວນເທິງ 60 ໝາຍເຖິງສ່ວນບຸກຄົນໃນສ່ວນເທິງ 60 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້.

**ຄົວເຮືອນ ມີລາຍໄດ້ມາຈາກຫຼາກຫຼາຍແຫຼ່ງ.** ການສຳຫຼວດຮອບຫຼ້າສຸດ ໃຫ້ເຫັນວ່າ: ໃນໄລຍະຄັ້ງເດືອນເມສາ/ພຶດສະພາ 2022 ແລະ ຄັ້ງເດືອນທັນວາ/ມັງກອນ 2022-23, ຄົວເຮືອນໃນເຂດຊົນນະບົດ ໄດ້ກະຈາຍແຫຼ່ງລາຍໄດ້ການຫາລ້ຽງຊີບ ດ້ວຍການເຮັດກິດຈະກຳສ້າງລາຍໄດ້ຕ່າງໆ ໃນຂະນະດຽວກັນ ຈຳນວນຄົວເຮືອນໃນເຂດຕົວເມືອງ ທີ່ມີລາຍໄດ້ຈາກທຸລະກິດຄອບຄົວ ແລະ ເງິນໂອນຈາກຕ່າງປະເທດ ແມ່ນມີຈຳນວນທີ່ເພີ່ມຂຶ້ນ. ຕ້ອງຂອບໃຈກິດຈະກຳການຜະລິດກະສິກຳ ທີ່ເພີ່ມສູງຂຶ້ນໃນໄລຍະລະດູການຜະລິດປີ 2022 ເມື່ອສົມທຽບໃສ່ປີກ່ອນໜ້ານັ້ນ, ລາຍຮັບຈາກການຜະລິດ ກະສິກຳ ຖືເປັນແຫຼ່ງລາຍຮັບ ທີ່ເພີ່ມຂຶ້ນຫຼາຍສຸດສຳລັບທຸກປະເພດຄົວເຮືອນ ຍົກເວັ້ນຄົວເຮືອນທີ່ມີແມ່ຍິງເປັນຫົວໜ້າຄອບຄົວ (ຕາຕະລາງ 8). ກຸ່ມຄົວເຮືອນທີ່ມີແມ່ຍິງເປັນຫົວໜ້າຄອບຄົວກະຈາຍລາຍໄດ້ຂອງຕົນ ດ້ວຍການເຮັດກິດຈະກຳສ້າງລາຍໄດ້ຕ່າງໆ ນັບຕັ້ງແຕ່ການເຮັດທຸລະກິດ ໄປຈົນຮອດ ການໄດ້ເງິນຈາກເງິນໂອນຈາກຕ່າງປະເທດ. ໃນຈຳນວນຄົວເຮືອນສ່ວນລຸ່ມ 40 ເຫັນວ່າ: ລາຍໄດ້ທີ່ເພີ່ມຂຶ້ນຫຼາຍສຸດຂອງເຂົາເຈົ້າ ແມ່ນມາຈາກແຫຼ່ງເງິນໂອນພາຍໃນ.

**ລາຍໄດ້ຂອງຄົວເຮືອນຈາກການເຮັດກິດຈະກຳທາງທຸລະກິດ ພົບວ່າ: ໄດ້ຮັບຜົນກະທົບທາງລົບຫຼາຍສຸດ.** ປີທີ່ຜ່ານມາ ພົບວ່າ: ຫຼາຍກວ່າໜຶ່ງສ່ວນສາມຂອງຄົວເຮືອນທັງໝົດ ມີລາຍໄດ້ຈາກທຸລະກິດ. ຢ່າງໃດກໍ່ດີ, 40% ຂອງຈຳນວນຄົວເຮືອນເຫຼົ່ານັ້ນມີລາຍໄດ້ຫຼຸດລົງຈາກການເຮັດທຸລະກິດ ເຊິ່ງຫຼາຍກວ່າໝູ່ແມ່ນສ່ວນແບ່ງຄົວເຮືອນທີ່ມີແມ່ຍິງເປັນຫົວໜ້າຄອບຄົວ ແລະ ຄົວເຮືອນໃນເຂດຕົວເມືອງ (ຕາຕະລາງ 9). ເຖິງວ່າ ລາຍໄດ້ຈາກການຜະລິດກະສິກຳ ຖືເປັນແຫຼ່ງລາຍໄດ້ຫຼັກໃນການລ້ຽງຊີບສຳລັບ 77,6% ຂອງຈຳນວນຄົວເຮືອນທັງໝົດ, ແຕ່ມີພຽງແຕ່ 27% ຂອງຜູ້ຕອບສຳພາດ ທີ່ລາຍງານວ່າ: ມີລາຍໄດ້ຈາກການຜະລິດກະສິກຳ ຫຼຸດລົງໃນໄລຍະປີກາຍ. ລາຍໄດ້ຄົວເຮືອນທີ່ມາຈາກຄ່າຕອບແທນແຮງງານ ໂດຍລວມມີຄວາມໝັ້ນຄົງກວ່າລາຍໄດ້ຈາກແຫຼ່ງອື່ນໆ, ໂດຍມີພຽງແຕ່ 17,4% ຂອງຈຳນວນຄົວເຮືອນທັງໝົດ ທີ່ລາຍງານການຫຼຸດລົງຂອງລາຍໄດ້ຈາກຄ່າຕອບແທນແຮງງານ ແລະ ອີກ 5,9% ປະເຊີນກັບສະພາບລາຍໄດ້ຈາກຄ່າຕອບແທນແຮງງານຫຼຸດລົງກາຍເຄິ່ງໃນປີກາຍ. ການສູນເສຍລາຍໄດ້ຄົວເຮືອນຈາກແຫຼ່ງການເຮັດວຽກໃຫ້ຄ່າຕອບແທນແຮງງານຍັງຢູ່ໃນຂອບເຂດທີ່ກວ້າງ ສຳລັບກຸ່ມຄົວເຮືອນທີ່ມີແມ່ຍິງເປັນຫົວໜ້າຄອບຄົວ ແລະ ຄົວເຮືອນທີ່ມີລາຍໄດ້ຕ່ຳ.

ຕາຕະລາງ 8. ແຫຼ່ງລາຍໄດ້ຂອງຄົວເຮືອນ

| | % ຂອງຄົວເຮືອນທີ່ອາໄສແຕ່ລະແຫຼ່ງລາຍໄດ້ | | | | | | | | | |
|---|---|---|---|---|---|---|---|---|---|---|
| | ລາຍໄດ້ຈາກການຜະລິດກະສິກຳ | | ລາຍໄດ້ຈາກການເຮັດທຸລະກິດ | | ລາຍໄດ້ຈາກຄ່າຕອບແທນແຮງງານ | | ເງິນໂອນຈາກຕ່າງປະເທດ | | ເງິນໂອນພາຍໃນ | |
| | ທັນວາ/ມັງກອນ 2022-23 | ປ່ຽນແປງຈາກ ເມສາ/ພຶດສະພາ 2022 | ທັນວາ/ມັງກອນ 2022-23 | ປ່ຽນແປງຈາກ ເມສາ/ພຶດສະພາ 2022 | ທັນວາ/ມັງກອນ 2022-23 | ປ່ຽນແປງຈາກ ເມສາ/ພຶດສະພາ 2022 | ທັນວາ/ມັງກອນ 2022-23 | ປ່ຽນແປງຈາກ ເມສາ/ພຶດສະພາ 2022 | ທັນວາ/ມັງກອນ 2022-23 | ປ່ຽນແປງຈາກ ເມສາ/ພຶດສະພາ 2022 |
| ຄົວເຮືອນທັງໝົດ | 77,6 | 9,6 | 35,5 | 2,0 | 69,6 | 2,2 | 9,2 | 2,1 | 16,9 | 0,2 |
| ຜູ້ຊາຍເປັນຫົວໜ້າຄອບຄົວ | 79,3 | 10,4 | 34,7 | 1,5 | 70,3 | 1,9 | 8,4 | 1,8 | 17,0 | -0,03 |
| ແມ່ຍິງເປັນຫົວໜ້າຄອບຄົວ | 61,1 | -2,8 | 42,3 | 8,2 | 62,8 | 0,1 | 16,9 | 8,0 | 16,0 | 0,6 |
| ເຂດຕົວເມືອງ | 56,6 | 8,9 | 42,0 | 4,2 | 77,1 | -0,4 | 9,4 | 4,5 | 15,9 | 0,1 |
| ເຂດຊົນນະບົດ | 88,8 | 10,0 | 32,0 | 0,9 | 65,6 | 3,6 | 9,0 | 0,9 | 17,4 | 0,2 |
| ສ່ວນເທິງ 60 | 73,0 | 10,5 | 41,1 | 2,2 | 71,8 | 2,3 | 8,8 | 2,2 | 16,7 | -0,8 |
| ສ່ວນລຸ່ມ 40 | 88,1 | 7,9 | 22,4 | 1,41 | 64,5 | 1,8 | 10,0 | 2,2 | 17,3 | 2,5 |

ໝາຍເຫດ: ຕົວເລກ ໄດ້ຜ່ານການຄຳນວນໂດຍອີງໃສ່ສູດຖ່ວງນ້ຳໜັກ. ສ່ວນລຸ່ມ 40 ໝາຍເຖິງສ່ວນບຸກຄົນໃນສ່ວນລຸ່ມ 40 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້. ສ່ວນເທິງ 60 ໝາຍເຖິງ 60 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້.

ຕາຕະລາງ 9. ການຫຼຸດລົງຂອງລາຍໄດ້ຄົວເຮືອນ ຕາມແຫຼ່ງລາຍໄດ້

| | % ຂອງຈຳນວນຄົວເຮືອນທັງໝົດ ຕາມແຕ່ລະແຫຼ່ງລາຍໄດ້ ທີ່ພະເຊີນບັນຫາການຫຼຸດລົງຂອງລາຍໄດ້ ໃນການສຳຫຼວດຄັ້ງເດືອນທັນວາ/ມັງກອນ 2022-23 ເມື່ອສົມທຽບໃສ່ໄລຍະເວລາດຽວກັນຂອງປີກາຍ | | | | | | | | | |
|---|---|---|---|---|---|---|---|---|---|---|
| | ລາຍໄດ້ຈາກການຜະລິດກະສິກຳ | | ລາຍໄດ້ຈາກທຸລະກິດຄອບຄົວ | | ລາຍໄດ້ຈາກຄ່າຕອບແທນແຮງງານ | | ເງິນໂອນຈາກຕ່າງປະເທດ | | ເງິນໂອນພາຍໃນ | |
| | ໜ້ອຍກວ່າເດີມ | ຫຼາຍກວ່າເດີມ | ໜ້ອຍກວ່າເດີມ | ຫຼາຍກວ່າເດີມ | ໜ້ອຍກວ່າເດີມ | ຫຼາຍກວ່າເດີມ | ໜ້ອຍກວ່າເດີມ | ຫຼາຍກວ່າເດີມ | ໜ້ອຍກວ່າເດີມ | ຫຼາຍກວ່າເດີມ |
| ຄົວເຮືອນທັງໝົດ | 16,1 | 11,1 | 23,7 | 16,8 | 11,5 | 5,9 | 11,7 | 12,1 | 16,2 | 11,3 |
| ຜູ້ຊາຍເປັນຫົວໜ້າຄອບຄົວ | 16,1 | 11,0 | 23,4 | 15,8 | 11,7 | 5,7 | 13,3 | 12,3 | 15,2 | 11,6 |
| ແມ່ຍິງເປັນຫົວໜ້າຄອບຄົວ | 16,7 | 12,7 | 25,5 | 24,8 | 8,9 | 7,6 | 4,3 | 11,1 | 26,3 | 8,9 |
| ເຂດຕົວເມືອງ | 16,4 | 14,8 | 26,6 | 18,0 | 8,4 | 6,6 | 15,8 | 13,0 | 16,8 | 15,3 |
| ເຂດຊົນນະບົດ | 16,0 | 9,9 | 21,6 | 16,0 | 13,4 | 5,4 | 9,5 | 11,5 | 15,9 | 9,4 |
| ສ່ວນເທິງ 60 | 17,8 | 10,6 | 24,1 | 16,7 | 11,1 | 4,9 | 11,5 | 12,8 | 16,0 | 11,3 |
| ສ່ວນລຸ່ມ 40 | 12,9 | 12,1 | 21,9 | 17,3 | 12,4 | 8,3 | 12,3 | 10,6 | 16,6 | 7,4 |

ໝາຍເຫດ: ຕົວເລກ ໄດ້ຜ່ານການຄຳນວນໂດຍອີງໃສ່ສູດຖ່ວງນ້ຳໜັກ. ສ່ວນລຸ່ມ 40 ໝາຍເຖິງສ່ວນບຸກຄົນໃນສ່ວນລຸ່ມ 40 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້. ສ່ວນເທິງ 60 ໝາຍເຖິງ 60 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້.

## ການຊົມໃຊ້

ຜົນກະທົບຈາກການເພີ່ມສູງຂຶ້ນຂອງລາຄານ້ຳມັນເຊື້ອໄຟ ແລະ ລາຄາສະບຽງອາຫານ

**ບັນຫາເງິນເຟີ້ ໄດ້ສົ່ງຜົນກະທົບຕໍ່ເກືອບທຸກຄົວເຮືອນ** ໂດຍເກົ້າສິບສ່ວນຮ້ອຍຂອງຜູ້ຕອບສຳພາດທັງໝົດ ແຈ້ງໃຫ້ຮູ້ວ່າ: ຄົວເຮືອນຂອງຕົນ ໄດ້ຮັບຜົນກະທົບຈາກບັນຫາເງິນເຟີ້ໃນປີ 2022, ໃນນັ້ນ 57% ຕ້ອງປະເຊີນກັບຜົນກະທົບໃນລະດັບສູງ (ຕາຕະລາງ 10). ຄົວເຮືອນໃນເຂດຕົວເມືອງ ແລະ ຄົວເຮືອນສ່ວນເທິງ 60 ພົບວ່າ: ຖືກກະທົບໃນລັກສະນະບໍ່ສົມສ່ວນຄື: 63% ຂອງຄົວເຮືອນໃນເຂດຕົວເມືອງ 57% ຂອງຄົວເຮືອນສ່ວນເທິງ 60 ໄດ້ຮັບຜົນກະທົບໃນລະດັບສູງຈາກບັນຫາເງິນເຟີ້ ປີ 2022 ເມື່ອສົມທຽບໃສ່ 53% ຂອງຄົວເຮືອນໃນເຂດຊົນນະບົດ ແລະ 55% ຂອງຄົວເຮືອນສ່ວນລຸ່ມ 40 ທີ່ໄດ້ຮັບຜົນກະທົບລະດັບສູງ.

**ຫຼາຍຄົວເຮືອນ ນຳໃຊ້ຫຼາກຫຼາຍວິທີຕ່າງໆກັນ ເພື່ອປົກປ້ອງຕົນເອງຈາກບັນຫາເງິນເຟີ້.** ໃນການຮັບມືກັບບັນຫາການເຟີ້ຂອງລາຄານ້ຳມັນເຊື້ອໄຟ, ປະມານ 80% ຂອງຄົວເຮືອນທີ່ໄດ້ຮັບຜົນກະທົບ ໄດ້ຫຼຸດປະລິມານການຊົມໃຊ້ນ້ຳມັນເຊື້ອໄຟ ແລະ ສິນຄ້າທີ່ບໍ່ແມ່ນນ້ຳມັນເຊື້ອໄຟລົງ. ມີຄວາມເປັນໄປໄດ້ສູງທີ່ ຄົວເຮືອນລາຍໄດ້ຕ່ຳ ແລະ ຄົວເຮືອນໃນເຂດຊົນນະບົດ ຈະຂາຍຊັບສິນຂອງຕົນ ແລະ ສະແຫວງຫາໂອກາດສ້າງລາຍໄດ້ເພີ່ມ ເມື່ອທຽບໃສ່ຄົວເຮືອນໃນກຸ່ມອື່ນໆ, ໃນຂະນະທີ່ຄົວເຮືອນທີ່ມີລາຍໄດ້ສູງ ຢູ່ໄດ້ດ້ວຍການອາໄສເງິນແຮທີ່ມີ. ມີສັດສ່ວນນ້ອຍໜຶ່ງຂອງຈຳນວນຄົວເຮືອນທັງໝົດ (5,7%) ທີ່ລາຍງານວ່າ: ເຂົາເຈົ້າ ໄດ້ຮັບການຊ່ວຍເຫຼືອຈາກລັດຖະບານ ເພື່ອແກ້ໄຂບັນຫາເງິນເຟີ້ຂອງລາຄານ້ຳມັນເຊື້ອໄຟ.

**ຄົວເຮືອນສ່ວນໃຫຍ່ ຮັບມືກັບເງິນເຟີ້ຂອງລາຄາສະບຽງອາຫານ ດ້ວຍການປູກຝັງ ຫຼື ຊອກຫາອາຫານຕາມທຳມະຊາດ ທັງ ຫັນໄປບໍລິໂພກອາຫານທີ່ມີລາຄາຖືກລົງ ຫຼື ຫຼຸດລະດັບການບໍລິໂພກອາຫານລົງ.** ຄົວເຮືອນທຸກຍາກໃນເຂດຊົນນະບົດສ່ວນໃຫຍ່ຕ້ອງອາໄສການຜະລິດກະສິກຳແບບເອື່ອຍອີງທຳມະຊາດ ເພື່ອຮັບມືກັບບັນຫາເງິນເຟີ້ສູງ. ຢ່າງໃດກໍດີ, 72% ຂອງຄົວເຮືອນໃນສ່ວນລຸ່ມ 40 ລາຍງານວ່າ: ຕ້ອງໄດ້ຫຼຸດການບໍລິໂພກອາຫານລົງ ເຊິ່ງເຫັນວ່າ: ມີປະມານ 10 ຈຸດເປີເຊັນ ສູງກວ່າ ການຫຼຸດບໍລິໂພກອາຫານລົງໃນກຸ່ມຄົວເຮືອນສ່ວນເທິງ 60. ປະເດັນດັ່ງກ່າວ ເນັ້ນໃຫ້ເຫັນລະດັບຄວາມບອບບາງຂອງຄົວເຮືອນທີ່ມີລາຍໄດ້ຕ່ຳ ທີ່ຕ້ອງປະເຊີນກັບບັນຫາເງິນເຟີ້ຂອງລາຄາສະບຽງອາຫານທີ່ສູງຢູ່ລາວ. ເຊັ່ນດຽວກັບກໍລະນີການຮັບມືກັບເງິນເຟີ້ຂອງລາຄານ້ຳມັນເຊື້ອໄຟ ມີຄົວເຮືອນຈຳນວນນ້ອຍໜຶ່ງເທົ່ານັ້ນ (6% ໂດຍລວມ ແລະ ອີກ 8% ໃນກຸ່ມສ່ວນລຸ່ມ 40) ທີ່ແຈ້ງໃຫ້ຮູ້ວ່າ: ໄດ້ຮັບການຊ່ວຍເຫຼືອຈາກລັດຖະບານ ເພື່ອຮັບມືກັບບັນຫາການເຟີ້ຂອງລາຄາສະບຽງອາຫານ. ເມື່ອສົມທຽບໃສ່ຄົວເຮືອນທີ່ມີລາຍໄດ້ສູງແລ້ວເຫັນວ່າ: ມີຄວາມເປັນໄປໄດ້ສູງທີ່ຄົວເຮືອນທີ່ມີລາຍໄດ້ຕ່ຳ ຈະກູ້ຢືມເງິນຈາກທະນາຄານທຸລະກິດ ຫຼື ສະຖາບັນການເງິນ, ຈາກຄົນໃນຄອບຄົວ ແລະ ໝູ່ເພື່ອນ ຫຼື ຕ້ອງຊື້ສິນຄ້າ ຫຼື ບໍລິການແບບຕິດໜີ້ ເພື່ອຮັບມືກັບລາຄາສະບຽງອາຫານທີ່ເພີ່ມສູງຂຶ້ນ.

ຕາຕະລາງ 10. ຜົນກະທົບຂອງບັນຫາເງິນເຟີ້ ທີ່ມີຕໍ່ຄົວເຮືອນ

| | % ຂອງຄົວເຮືອນທີ່ໄດ້ຮັບຜົນກະທົບຈາກບັນຫາເງິນເຟີ້ | | | 5 ຍຸດທະສາດອັນດັບຕົ້ນ ເພື່ອຮັບມືກັບບັນຫາເງິນເຟີ້ຂອງລາຄານ້ຳມັນເຊື້ອໄຟ (% ຂອງຄົວເຮືອນທີ່ໄດ້ຮັບຜົນກະທົບ) | | | | | 5 ຍຸດທະສາດອັນດັບຕົ້ນ ເພື່ອຮັບມືກັບບັນຫາເງິນເຟີ້ຂອງລາຄາສະບຽງອາຫານ (% ຂອງຄົວເຮືອນທີ່ໄດ້ຮັບຜົນກະທົບ) | | | | |
|---|---|---|---|---|---|---|---|---|---|---|---|---|---|
| | ບໍ່ໄດ້ຮັບຜົນກະທົບ | ໄດ້ຮັບຜົນກະທົບໃນລະດັບໃດໜຶ່ງ | ໄດ້ຮັບຜົນກະທົບໃນລະດັບສູງ | ຫຼຸດການຊົມໃຊ້ນ້ຳມັນເຊື້ອໄຟ | ຫຼຸດການຊົມໃຊ້ສິນຄ້າອື່ນ ທີ່ບໍ່ແມ່ນນ້ຳມັນເຊື້ອໄຟ | ອາໄສເງິນແຮ | ສ້າງລາຍໄດ້ເພີ່ມ | ຂາຍຊັບສິນ | ເຮັດການປູກຝັງຜະລິດສະບຽງອາຫານເອງ | ບໍລິໂພກສະບຽງອາຫານລາຄາຖືກລົງ | ອາໄສເງິນແຮ | ລ່າສັດ ຫຼື ຫາອາຫານຕາມທຳມະຊາດ | ຫຼຸດການບໍລິໂພກສະບຽງອາຫານ |
| ຄົວເຮືອນທັງໝົດ | 12,6 | 30,9 | 56,5 | 80,7 | 77,6 | 70,4 | 58,3 | 41,6 | 87,5 | 77,1 | 72,3 | 68,7 | 65,7 |
| ເຂດຕົວເມືອງ | 10,1 | 27,0 | 62,9 | 81,3 | 75,8 | 70,3 | 50,4 | 28,7 | 75,9 | 77,2 | 73,6 | 52,5 | 64,1 |
| ເຂດຊົນນະບົດ | 13,9 | 33,0 | 53,0 | 80,4 | 78,7 | 70,4 | 62,7 | 48,8 | 94,0 | 77,1 | 71,6 | 77,7 | 66,6 |
| ສ່ວນເທິງ 60 | 11,7 | 31,0 | 57,3 | 81,1 | 76,5 | 72,0 | 55,3 | 39,0 | 85,4 | 76,8 | 75,0 | 64,0 | 62,9 |
| ສ່ວນລຸ່ມ 40 | 14,7 | 30,7 | 54,6 | 79,7 | 80,3 | 66,4 | 65,6 | 47,8 | 92,7 | 78,0 | 65,7 | 79,7 | 72,5 |

ໝາຍເຫດ: ຕົວເລກ ໄດ້ຜ່ານການຄຳນວນໂດຍອີງໃສ່ສູດຖ່ວງນ້ຳໜັກ.. ສ່ວນລຸ່ມ 40 ໝາຍເຖິງສ່ວນບຸກຄົນໃນສ່ວນລຸ່ມ 40 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້. ສ່ວນເທິງ 60 ໝາຍເຖິງ 60 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້.

## ທຸລະກິດຄອບຄົວ

**ເກືອບໝົດທຸກຫົວໜ່ວຍທຸລະກິດຄອບຄົວ ລາຍງານວ່າ: ໄດ້ປະເຊີນກັບສິ່ງທ້າທາຍໃນການດຳເນີນທຸລະກິດ ຍ້ອນບັນຫາເງິນເຟີ້ຂອງລາຄານ້ຳມັນເຊື້ອໄຟ ແລະ ສິນຄ້າທີ່ບໍ່ແມ່ນນ້ຳມັນເຊື້ອໄຟ, ບັນຫາການອ່ອນຄ່າຂອງເງິນກີບ ແລະ ບັນຫາຂາດແຄນນ້ຳມັນເຊື້ອໄຟ.** ຜົນກະທົບຂອງລາຄ້ານ້ຳມັນເຊື້ອໄຟທີ່ເພີ່ມສູງຂຶ້ນ ແລະ ບັນຫາຂາດແຄນນ້ຳມັນເຊື້ອໄຟທີ່ມີຕໍ່ການດຳເນີນທຸລະກິດ ພົບວ່າ: ກະທົບໜັກສຸດຕໍ່ທຸລະກິດຂອງຄົວເຮືອນລາຍໄດ້ຕ່ຳເປັນເຈົ້າຂອງ ແລະ ບັນດາທຸລະກິດໃນເຂດຊົນນະບົດ. ຫຼາຍກວ່າ 90% ຂອງທຸລະກິດໃນເຂດຊົນນະບົດ ແຈ້ງໃຫ້ຮູ້ວ່າ: ບັນຫາຂາດແຄນນ້ຳມັນເຊື້ອໄຟ

ໄດ້ສົ່ງຜົນກະທົບຕໍ່ການດໍາເນີນທຸລະກິດຂອງເຂົາເຈົ້າ ເມື່ອທຽບໃສ່ທຸລະກິດໃນເຂດຕົວເມືອງທີ່ຖືກກະທົບພຽງ 83% (ຕາຕະລາງ 11).

**ປັດໄຈດຽວກັນທີ່ກ່າວເຖິງນັ້ນ ຍັງສົ່ງຜົນກະທົບທາງລົບ ຕໍ່ຜົນກໍາໄລຂອງປະມານເຄິ່ງໜຶ່ງຂອງທຸລະກິດຄອບຄົວທັງໝົດ.** ມີຄວາມເປັນໄປໄດ້ສູງ ທີ່ຫົວໜ່ວຍວິສາຫະກິດເຊິ່ງມີແມ່ຍິງເປັນເຈົ້າຂອງ ຫຼື ບໍລິຫານ ແລະ ທຸລະກິດທີ່ຄົວເຮືອນລາຍໄດ້ສູງເປັນເຈົ້າຂອງ ຈະຖືກກະທົບຈາກບັນຫາເງິນເຟີ້, ການອ່ອນຄ່າຂອງເງິນກີບ ແລະ ບັນຫາຂາດແຄນນ້ຳມັນເຊື້ອໄຟ ເມື່ອສົມທຽບໃສ່ກັບຫົວໜ່ວຍວິສາຫະກິດອື່ນໆ. ຍົກຕົວຢ່າງ: ບັນຫາເງິນເຟີ້ ເຮັດໃຫ້ 53% ຂອງທຸລະກິດທີ່ມີແມ່ຍິງເປັນເຈົ້າຂອງ ຫຼື ບໍລິຫານ ມີກໍາໄລຫຼຸດລົງ ເມື່ອສົມທຽບໃສ່ ທຸລະກິດທີ່ມີຜູ້ຊາຍເປັນເຈົ້າຂອງ ຫຼື ບໍລິຫານ ທີ່ມີພຽງ 42% ໄດ້ຮັບຜົນກະທົບ. ບັນຫາຂາດແຄນນ້ຳມັນເຊື້ອໄຟ ມີທ່າອ່ຽງສົ່ງຜົນກະທົບຫຼາຍຕໍ່ຫົວໜ່ວຍວິສາຫະກິດຄອບຄົວໃນເຂດຊົນນະບົດ ໃນຂະນະທີ່ບັນຫາການອ່ອນຄ່າຂອງເງິນກີບ ແລະ ບັນຫາເງິນເຟີ້ ສົ່ງຜົນກະທົບຫຼາຍຕໍ່ຫົວໜ່ວຍວິສະຫະກິດຄອບຄົວໃນເຂດຕົວເມືອງ.

**ຕາຕະລາງ 11. ຜົນກະທົບຂອງບັນຫາເງິນເຟີ້ ທີ່ມີຕໍ່ທຸລະກິດຄອບຄົວ**

| | ຜົນການກະທົບຕ່າງໆ ທີ່ມີຕໍ່ການດໍາເນີນທຸລະກິດ ແລະ ຜົນກໍາໄລຂອງທຸລະກິດ (% ຂອງທຸລະກິດຄອບຄົວ ທີ່ເຄື່ອນໄຫວທຸລະກິດຫຼາຍກວ່າໜຶ່ງປີ) | | | | | | | |
|---|---|---|---|---|---|---|---|---|
| | ອຸປະສັກກີດຂວາງການດໍາເນີນທຸລະກິດ | | | | ຜົນກະທົບທາງລົບຕໍ່ກໍາໄລ | | | |
| | ລາຄານ້ຳມັນເຊື້ອໄຟ | ບັນຫາ ຂາດແຄນນ້ຳມັນເຊື້ອໄຟ | ບັນຫາການອ່ອນຄ່າຂອງເງິນກີບ | ລາຄາເພີ່ມສູງຂື້ນ (ບໍ່ລວມນ້ຳມັນເຊື້ອໄຟ) | ລາຄານ້ຳມັນເຊື້ອໄຟ | ບັນຫາ ຂາດແຄນນ້ຳມັນເຊື້ອໄຟ | ບັນຫາການອ່ອນຄ່າຂອງເງິນກີບ | ລາຄາເພີ່ມສູງຂື້ນ (ບໍ່ລວມນ້ຳມັນເຊື້ອໄຟ) |
| ຄົວເຮືອນທັງໝົດ | 93,5 | 88,7 | 91,9 | 93,2 | 45,0 | 52,9 | 49,6 | 46,5 |
| ຜູ້ຊາຍເປັນຫົວໜ້າຄອບຄົວ | 94,5 | 89,6 | 92,2 | 91,6 | 42,1 | 50,9 | 46,0 | 41,6 |
| ແມ່ຍິງເປັນຫົວໜ້າຄອບຄົວ | 92,2 | 87,6 | 91,5 | 95,3 | 48,8 | 55,5 | 54,3 | 52,8 |
| ເຂດຕົວເມືອງ | 90,2 | 82,9 | 91,6 | 92,5 | 44,7 | 51,3 | 54,7 | 50,1 |
| ເຂດຊົນນະບົດ | 95,3 | 91,8 | 92,0 | 93,6 | 45,2 | 53,7 | 47,0 | 44,6 |
| ສ່ວນເທິງ 60 | 92,7 | 87,9 | 91,8 | 93,7 | 46,7 | 54,3 | 51,8 | 48,4 |
| ສ່ວນລຸ່ມ 40 | 96,8 | 92,0 | 92,2 | 91,5 | 38,7 | 47,5 | 41,3 | 39,0 |

ໝາຍເຫດ: ຕົວເລກ ໄດ້ຜ່ານການຄໍານວນໂດຍອີງໃສ່ສູດຖ່ວງນ້ຳໜັກ. ສ່ວນລຸ່ມ 40 ໝາຍເຖິງສ່ວນບຸກຄົນໃນສ່ວນລຸ່ມ 40 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້. ສ່ວນເທິງ 60 ໝາຍເຖິງ 60 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້. ສ່ວນແບ່ງຂອງທຸລະກິດທີ່ມີຜູ້ຊາຍ ຫຼື ແມ່ຍິງ ເປັນເຈົ້າຂອງ ຫຼື ບໍລິຫານ ແມ່ນ 57 ແລະ 43 ສ່ວນຮ້ອຍຕາມລໍາດັບ.

## ຄົວເຮືອນທີ່ເຮັດການຜະລິດກະສິກໍາ

**ບັນຫາເງິນເຟີ້ຂອງລາຄາປັດໄຈການຜະລິດກະສິກໍາ ແລະ ລາຄານ້ຳມັນເຊື້ອໄຟ ໄດ້ສົ່ງຜົນກະທົບຕໍ່ຄົວເຮືອນທີ່ເຮັດການຜະລິດກະສິກໍາເກືອບທັງໝົດ.** ປະມານ 90% ຂອງຄົວເຮືອນທີ່ເຮັດການຜະລິດກະສິກໍາ ລາຍງານສະພາບທີ່ຕ້ອງປະເຊີນບັນຫາການເພີ່ມຂຶ້ນຂອງລາຄານ້ຳມັນເຊື້ອໄຟ ແລະ ລາຄາປັດປັດໄຈການຜະລິດກະສິກໍາ. ໃນຈໍານວນປັດໄຈການຜະລິດກະສິກໍາທັງໝົດ, ບັນຫາການເພີ່ມຂຶ້ນຂອງລາຄານ້ຳມັນເຊື້ອໄຟ ຖືວ່າ: ມີຜົນກະທົບສູງສຸດ. ຫຼາຍກວ່າສອງສ່ວນສາມຂອງຄົວເຮືອນທີ່ເຮັດການຜະລິດກະສິກໍາ ນໍາໃຊ້ນ້ຳມັນເຊື້ອໄຟ ເປັນປັດໄຈການຜະລິດ ແລະ ສ່ວນແບ່ງດັ່ງກ່າວເພີ່ມຂຶ້ນເປັນ 75,2% ແລະ 77,6% ສໍາລັບຄົວເຮືອນທີ່ເຮັດການຜະລິດກະສິກໍາໃນເຂດຊົນນະບົດ ແລະ ຄົວເຮືອນທຸກຍາກທີ່ເຮັດການຜະລິດກະສິກໍາ (ຕາຕະລາງ 12). ຜົນກະທົບໂດຍກົງຂອງບັນຫາເງິນເຟີ້ ຍັງເຮັດໃຫ້ຄ່າແຮງງານເພີ່ມ

ສູງຂຶ້ນ ໂດຍ 85 ສ່ວນຮ້ອຍຂອງຄົວເຮືອນທີ່ເຮັດການຜະລິດກະສິກຳ ພົບກັບສະພາບຕ້ອງຈ່າຍຄ່າແຮງງານ ສູງກວ່າໃນປີກາຍ. ພົບວ່າ: ຫົວໜ່ວຍຜະລິດກະສິກຳໃນເຂດຊົນນະບົດ ຖືກກະທົບໃນລັກສະນະບໍ່ສົມສ່ວນຈາກບັນຫາການເພີ່ມຂຶ້ນຂອງລາຄາຝຸ່ນເຄມີ, ເຄື່ອງກົນຈັກການຜະລິດກະສິກຳ ແລະ ຄ່າແຮງງານ. ບໍ່ແມ່ນສະເພາະແຕ່ຄວາມເປັນຈິງທີ່ວ່າ: ບັນຫາຄົວເຮືອນເຮັດການຜະລິດກະສິກຳໃນເຂດຊົນນະບົດ ຕ້ອງອາໄສປັດໄຈການຜະລິດເຫຼົ່ານັ້ນໃນລະດັບສູງ ແຕ່ສ່ວນແບ່ງຄົວເຮືອນເຫຼົ່ານັ້ນ ສ່ວນໃຫຍ່ ຍັງຕ້ອງປະເຊີນກັບບັນຫາການເພີ່ມຂຶ້ນຂອງລາຄາປັດໄຈການຜະລິດ.

**ຕາຕະລາງ 12. ຜົນກະທົບຂອງບັນຫາເງິນເຟີ້ ຕໍ່ຄົວເຮືອນທີ່ເຮັດການຜະລິດກະສິກຳ**

| | % ຂອງຄົວເຮືອນທີ່ເຮັດການຜະລິດກະສິກຳ | | | | | | | | | |
|---|---|---|---|---|---|---|---|---|---|---|
| | ຝຸ່ນເຄມີ | | ເມັດພັນ | | ນ້ຳມັນກາຊວນ | | ເຄື່ອງກົນຈັກຜະລິດກະສິກຳ | | ແຮງງານການຜະລິດກະສິກຳ | |
| | ການນຳໃຊ້ | ພະເຊີນບັນຫາການເພີ່ມຂຶ້ນຂອງລາຄາ | ການນຳໃຊ້ | ພະເຊີນບັນຫາການເພີ່ມຂຶ້ນຂອງລາຄາ | ການນຳໃຊ້ | ພະເຊີນບັນຫາການເພີ່ມຂຶ້ນຂອງລາຄາ | ການນຳໃຊ້ | ພະເຊີນບັນຫາການເພີ່ມຂຶ້ນຂອງລາຄາ | ການນຳໃຊ້ | ພະເຊີນບັນຫາການເພີ່ມຂຶ້ນຂອງລາຄາ |
| ຄົວເຮືອນທັງໝົດ | 39,7 | 37,1 | 52,5 | 46,7 | 67,2 | 64,3 | 37,0 | 32,7 | 52,9 | 45,1 |
| ເຂດຕົວເມືອງ | 37,4 | 33,4 | 58,4 | 52,6 | 47,5 | 44,9 | 26,9 | 23,4 | 40,8 | 32,1 |
| ເຂດຊົນນະບົດ | 40,6 | 38,6 | 50,1 | 44,4 | 75,2 | 72,0 | 41,0 | 36,4 | 57,8 | 50,3 |
| ສ່ວນເທິງ 60 | 40,2 | 37,7 | 55,5 | 50,0 | 62,2 | 59,2 | 36,6 | 32,4 | 54,1 | 46,6 |
| ສ່ວນລຸ່ມ 40 | 38,7 | 36,0 | 46,4 | 40,0 | 77,6 | 74,5 | 37,7 | 33,2 | 50,5 | 42,1 |

ໝາຍເຫດ: ຕົວເລກ ໄດ້ຜ່ານການຄຳນວນໂດຍອີງໃສ່ສູດຖ່ວງນ້ຳໜັກ. ສ່ວນລຸ່ມ 40 ໝາຍເຖິງສ່ວນບຸກຄົນໃນສ່ວນລຸ່ມ 40 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້. ສ່ວນເທິງ 60 ໝາຍເຖິງ 60 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້.

**ຕາຕະລາງ 13: ສິ່ງທ້າທາຍຕໍ່ການປູກຝັງ**

| | % ຂອງຄົວເຮືອນ ທີ່ຜະລິດແລະຂາຍພືດຊະນິດດຽວກັບປີກາຍ | | | | % ຂອງຄົວເຮືອນທີ່ເຮັດການຜະລິດພືດ | | | | % ຂອງຄົວເຮືອນທີ່ຂາຍພືດຜົນຜະລິດ | | | |
|---|---|---|---|---|---|---|---|---|---|---|---|---|
| | ສົມທຽບໃສ່ປີກາຍ | | | | ສິ່ງທ້າທາຍຕໍ່ການຜະລິດພືດສະບຽງອາຫານ | | | | ສິ່ງທ້າທາຍຕໍ່ການຂາຍພືດຜົນຜະລິດ | | | |
| | ການຜະລິດ | | ລາຄາຫົວໜ່ວຍ | | | | | | | | | |
| | ເພີ່ມຂຶ້ນ | ຫຼຸດລົງ | ເພີ່ມຂຶ້ນ | ຫຼຸດລົງ | ບໍ່ມີຄວາມຫຍຸ້ງຍາກ | ລາຄາແລະການຂາດແຄນ | ກ່ຽວຂ້ອງກັບດິນຟ້າອາກາດ | ສັດຕູພືດ, ພະຍາດ, ສັດ | ບໍ່ມີຄວາມຫຍຸ້ງຍາກ | ລາຄາຜົນຜະລິດຕ່ຳ | ລາຄານ້ຳມັນເຊື້ອໄຟ /ຄ່າຂົນສົ່ງ | ຂາດຜູ້ຮັບຊື້ / ຕະຫຼາດ |
| ຄົວເຮືອນທັງໝົດ | 52,4 | 25,9 | 84,4 | 5,8 | 29,3 | 26,5 | 17,6 | 12,3 | 52,6 | 17,2 | 11,8 | 9,8 |
| ເຂດຕົວເມືອງ | 51,7 | 23,8 | 81,7 | 3,5 | 42,6 | 20,6 | 12,7 | 10,2 | 48,4 | 20,6 | 13,3 | 10,1 |
| ເຂດຊົນນະບົດ | 52,6 | 26,5 | 85,1 | 6,4 | 23,9 | 28,9 | 19,5 | 13,1 | 53,7 | 16,3 | 11,3 | 9,7 |
| ສ່ວນເທິງ 60 | 53,7 | 24,8 | 83,0 | 5,4 | 32,1 | 24,1 | 17,0 | 12,8 | 52,9 | 18,1 | 12,4 | 9,5 |
| ສ່ວນລຸ່ມ 40 | 50,4 | 27,9 | 86,8 | 6,4 | 23,4 | 31,4 | 18,7 | 11,3 | 52,0 | 15,6 | 10,7 | 10,1 |

ໝາຍເຫດ: ຕົວເລກ ໄດ້ຜ່ານການຄຳນວນໂດຍອີງໃສ່ສູດຖ່ວງນ້ຳໜັກ. ສ່ວນລຸ່ມ 40 ໝາຍເຖິງສ່ວນບຸກຄົນໃນສ່ວນລຸ່ມ 40 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້. ສ່ວນເທິງ 60 ໝາຍເຖິງ 60 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້.

**ເງິນເຟີ້ຂອງລາຄາປັດໄຈການຜະລິດກະສິກຳ ໄດ້ສົ່ງຜົນເຮັດໃຫ້ການຜະລິດພືດສະບຽງອາຫານຫຼຸດລົງ.** ເຖິງວ່າ ພືດຜົນຜະລິດ ຈະມີລາຄາສູງຂຶ້ນກໍຕາມ ແຕ່ໜຶ່ງສ່ວນສີ່ຂອງຄົວເຮືອນທີ່ເຮັດການຜະລິດພືດສະບຽງອາຫານ ແຈ້ງໃຫ້ຮູ້ວ່າ: ເຂົາເຈົ້າ ໄດ້ຫຼຸດການຜະລິດລົງ ຕັ້ງແຕ່ປີກາຍ. ສ່ວນແບ່ງຂອງຄົວເຮືອນທີ່ລາຍງານສະພາບການຫຼຸດການຜະລິດລົງ ເຫັນວ່າ: ເກືອບຢູ່ໃນລະດັບດຽວກັນໝົດ ສຳລັບທຸກປະເພດຄົວເຮືອນ ມີແຕ່ສ່ວນແບ່ງຂອງຄົວເຮືອນທີ່ມີລາຍໄດ້ຕ່ຳ ທີ່ຫຼຸດການຜະລິດລົງ ໃນລະດັບອ່າວສູງກວ່າຄົວເຮືອນປະເພດອື່ນໆ ເລັກນ້ອຍ (ຕາຕະລາງ 13). ຄວາມເປັນຈິງທີ່ວ່າ: ລາຄາປັດໄຈການຜະລິດ ເພີ່ມຂຶ້ນຫຼາຍກວ່າລາຄາຜົນຜະລິດ ອາດຈະເປັນສາເຫດທີ່ເຮັດໃຫ້ຫຼາຍຄົວເຮືອນຕ້ອງຫຼຸດການຜະລິດລົງ: 26,5% ຂອງຄົວເຮືອນ ແຈ້ງວ່າ: ບັນຫາຂາດແຄນປັດໄຈການຜະລິດ ແລະ ລາຄາປັດໄຈການຜະລິດ ຖືເປັນສິ່ງທ້າທາຍສຳຄັນສຸດຕໍ່ການຜະລິດພືດສະບຽງອາຫານ. ໃນຂະນະທີ່ 17,2% ແຈ້ງວ່າ: ລາຄາຜົນຜະລິດທີ່ຕ່ຳ ແມ່ນສິ່ງທ້າຍທາຍສຳຄັນສຸດ ໃນເວລາຕ້ອງຂາຍພືດຜົນຜະລິດ.

**ໄພພິບັດທຳມະຊາດ ສົ່ງຜົນກະທົບຕໍ່ການຜະລິດພືດສະບຽງອາຫານຢູ່ລາວ ເກືອບຢາກວ່າຢູ່ໃນລະດັບດຽວກັບຜົນກະທົບຈາກບັນຫາເງິນເຟີ້ສູງ.** ຄົວເຮືອນທີ່ລາຍງານວ່າ: ການຜະລິດພືດສະບຽງອາຫານໄດ້ຮັບຜົນກະທົບຈາກໄພພິບັດທຳມະຊາດ ກັບ ຄົວເຮືອນທີ່ລາຍງານວ່າ: ການຜະລິດສະບຽງອາຫານ ໄດ້ຮັບຜົນກະທົບຈາກບັນຫາເງິນເຟີ້ຂອງລາຄາປັດໄຈການຜະລິດ ພົບວ່າ: ມີສັດສ່ວນເທົ່າກັນ. ເຫັນວ່າ: ໄພພິບັດທຳມະຊາດ ສົ່ງຜົນກະທົບໃນລັກສະນະແຈກຢາຍເປັນກາງ ໝາຍວ່າ: ຄົວເຮືອນທີ່ມີຖານະຢູ່ລາວ ບໍ່ໄດ້ມີຄວາມສາມາດປັບຕົວ ໄດ້ດີກວ່າຄົວເຮືອນທີ່ທຸກຍາກ ໃນເວລາຕ້ອງຮັບມືກັບໄພພິບັດທຳມະຊາດ. ດ້ວຍເຫດນັ້ນ, ມາດຕະການປັບຕົວດ້ານການຜະລິດກະສິກຳຢູ່ລາວ ເພື່ອຮັບມືກັບຜົນກະທົບໃນລັກສະນະຕ່າງໆທີ່ເກີດຈາກບັນຫາການປ່ຽນແປງຂອງສະພາບດິນຟ້າອາກາດໃນອະນາຄົດ ຈຳເປັນຕ້ອງມີລັກສະນະກວ້າງຂວາງ.

### ການເບິ່ງແຍງສຸຂະພາບ, ການສຶກສາ ແລະ ເງິນແຮຂອງຄົວເຮືອນ

**ບັນຫາເງິນເຟີ້ ໄດ້ສົ່ງຜົນກະທົບທາງລົບຕໍ່ຄົວເຮືອນລາວສ່ວນໃຫຍ່ ໂດຍບີບຮັດງົບປະມານໃຊ້ຈ່າຍຂອງຄົວເຮືອນລົງ, ບີບບັງຄັບໃຫ້ຜູ້ຄົນຕ້ອງກູ້ຢືມເງິນ, ເອົາເງິນແຮອອກມາໃຊ້ກ່ອນ ຫຼື ຕ້ອງຫຼຸດລາຍຈ່າຍດ້ານການເບິ່ງແຍງສຸຂະພາບ ແລະ ດ້ານການສຶກສາລົງ.** ເກືອບໝົດທຸກຄົວເຮືອນ ລ້ວນແຕ່ໄດ້ຮັບຜົນກະທົບຈາກບັນຫາເງິນເຟີ້ຂອງລາຄາສິນຄ້າ ຫຼື ບໍລິການ ເຊິ່ງອັດຕາສ່ວນຄົວເຮືອນທີ່ໄດ້ຮັບຜົນກະທົບໃນລະດັບສູງ ແມ່ນກຸ່ມຄົວເຮືອນໃນເຂດຕົວເມືອງ ແລະ ຄົວເຮືອນລາຍໄດ້ສູງ. ກາຍເຄິ່ງຂອງຈຳນວນຄົວເຮືອນທີ່ໄດ້ຮັບຜົນກະທົບທາງລົບ ແຈ້ງໃຫ້ຮູ້ວ່າ: ເຂົາເຈົ້າ ຕ້ອງຫຼຸດລາຍຈ່າຍດ້ານການສຶກສາ ແລະ ດ້ານການເບິ່ງແຍງສຸຂະພາບລົງ (ຕາຕະລາງ 14). ການຫົດຕົວຂອງລາຍຈ່າຍທັງສອງຂົງເຂດ ພົບວ່າ: ຢູ່ໃນລະດັບສູງສຸດໃນກຸ່ມຄອບຄົວທຸກຍາກ ແລະ ຄອບຄົວເຂດຊົນນະບົດ ທີ່ມີງົບປະມານໃຊ້ຈ່າຍຈຳກັດສູງ. ບັນຫາເງິນເຟີ້ ຍັງເຮັດໃຫ້ເງິນແຮຂອງຄົວເຮືອນບົກແຫ້ງລົງ ໂດຍ 90% ຂອງຄົວເຮືອນທີ່ໄດ້ຮັບຜົນກະທົບຈາກບັນຫາເງິນເຟີ້ ແຈ້ງໃຫ້ຮູ້ວ່າ: ເຂົາເຈົ້າ ຕ້ອງເອົາເງິນແຮອອກມານຳໃຊ້. ເຖິງວ່າຄົວເຮືອນທີ່ທຸກຍາກ ກໍມີສະພາບຄືກັບຄົວເຮືອນອື່ນໆ ທີ່ຕ້ອງເອົາເງິນແຮອອກມາໃຊ້ຈ່າຍ ແຕ່ລະດັບເງິນແຮຂອງຄົວເຮືອນທຸກຍາກ ເຫັນວ່າ: ຕ່ຳກວ່າກຸ່ມຄົວເຮືອນອື່ນໆຫຼາຍ. ດ້ວຍເຫດນັ້ນ, ຜົນທະທ້ອນໄລຍະຍາວຂອງບັນຫາເງິນເຟີ້ສູງ (ເມື່ອພິຈາລະນາຈາກສະພາບຕ້ອງຫຼຸດລາຍຈ່າຍດ້ານການສຶກສາ

ແລະ ດ້ານການເບິ່ງແຍງສຸຂະພາບລົງ ບວກກັບສະພາບເງິນແຮບົກແຫ້ງໃນລະດັບສູງ) ໜ້າຈະຍັງຄົງສືບຕໍ່ກະທົບຕໍ່ກຸ່ມຄົວເຮືອນທີ່ທຸກຍາກ.

ຕາຕະລາງ 14. ຜົນກະທົບຂອງບັນຫາເງິນເຟີ້ ຕໍ່ລາຍຈ່າຍໃນການພັດທະນາທຶນມະນຸດ ແລະ ລະດັບເງິນແຮ

| | % ຂອງຄົວເຮືອນທີ່ໄດ້ຮັບຜົນກະທົບຈາກບັນຫາເງິນເຟີ້ | % ຂອງຄົວເຮືອນທີ່ໄດ້ຮັບຜົນກະທົບ | | |
|---|---|---|---|---|
| | | ຫຼຸດລາຍຈ່າຍດ້ານການສຶກສາ | ຫຼຸດລາຍຈ່າຍດ້ານການເບິ່ງແຍງສຸຂະພາບ | ເງິນແຮຫຼຸດລົງ |
| ຄົວເຮືອນທັງໝົດ | 87,4 | 55,8 | 57,9 | 90,0 |
| ເຂດຕົວເມືອງ | 89,9 | 50,5 | 52,1 | 90,9 |
| ເຂດຊົນນະບົດ | 86,1 | 58,8 | 61,1 | 89,5 |
| ສ່ວນເທິງ 60 | 88,3 | 50,7 | 54,6 | 90,1 |
| ສ່ວນລຸ່ມ 40 | 85,3 | 68,2 | 65,6 | 89,8 |

ໝາຍເຫດ: ຕົວເລກ ໄດ້ຜ່ານການຄຳນວນໂດຍອີງໃສ່ສູດຖ່ວງນ້ຳໜັກ. ສ່ວນລຸ່ມ 40 ໝາຍເຖິງສ່ວນບຸກຄົນໃນສ່ວນລຸ່ມ 40 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້. ສ່ວນເທິງ 60 ໝາຍເຖິງ 60 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້.

**ມີຄວາມເປັນໄປໄດ້ສູງ ທີ່ເດັກຈາກຄົວເຮືອນລາຍໄດ້ຕໍ່າ ຈະປະລະການຮຽນ.** ປະມານ 7% ຂອງຄົວເຮືອນທີ່ມີລາຍໄດ້ຕໍ່າ ແຈ້ງໃຫ້ຮູ້ວ່າ: ລູກຫຼານຂອງເຂົາເຈົ້າ ໃນກຸ່ມອາຍຸ 6 ເຖິງ 17 ປີ ໄດ້ປະລະການຮຽນໃນໄລຍະ 12 ເດືອນຜ່ານມາ ທຽບໃສ່ 2,7% ຂອງຄົວເຮືອນທີ່ມີຖານະ (ຕາຕະລາງ 15). ຫຼາຍກວ່າ 70% ຂອງຄົວເຮືອນທີ່ມີລາຍໄດ້ຕໍ່າ ໃຫ້ເຫດຜົນຕໍ່ກໍລະນີການປະລະການຮຽນວ່າ: ເປັນຍ້ອນຂາດຄວາມສາມາດແບກຮັບລາຍຈ່າຍສົ່ງລູກຫຼານສືບຕໍ່ຮຽນ ຫຼື ຍ້ອນຄວາມຈຳເປັນຕ້ອງໃຫ້ເຂົາເຈົ້າມາຊ່ວຍວຽກຫາລາຍໄດ້ເພີ່ມຂອງຄອບຄົວ. ເວົ້າສະເພາະ, ເຫດຜົນເຫຼົ່ານີ້ ຍິ່ງເຫັນວ່າ: ພົ້ນເດັ່ນໃນກຸ່ມຄົວເຮືອນເຂດໃນເມືອງ. ສຳລັບຄົວເຮືອນໃນເຂດຊົນນະບົດ ພົບວ່າ: ທັງສອງເຫດຜົນ ກວມເອົາ 65,4% ຂອງການປະລະການຮຽນ ຂະນະທີ່ອີກ 17,5% ໃຫ້ເຫດຜົນວ່າ: ຈຳເປັນຕ້ອງໃຫ້ລູກຫຼານມາຊ່ວຍວຽກເຮືອນການຊານ ແລະ ອີກ 6% ໃຫ້ເຫດຜົນການປະລະການຮຽນຂອງລູກຫຼານວ່າ: ເປັນຍ້ອນໄລຍະທາງໄປໂຮງຮຽນໄກ. ລາຍລະອຽດຂອງຄ່າໃຊ້ຈ່າຍດ້ານການສຶກສາຕາມຄ່າທຳນຽມໂຮງງານລັດ ແລະ ຄ່າຮຽນໂຮງຮຽນເອກະຊົນ, ປຶ້ມແລະເຄື່ອງຂຽນ, ແລະຄ່າໃຊ້ຈ່າຍຊື້ເຄື່ອງແບບນັກຮຽນ ຍິ່ງເນັ້ນໃຫ້ເຫັນຜົນກະທົບທາງລົບຂອງບັນຫາເງິນເຟີ້ ທີ່ມີຕໍ່ຄົວເຮືອນລາຍໄດ້ຕໍ່າ ໃນທົ່ວທຸກປະເພດລາຍຈ່າຍດ້ານການສຶກສາ.

ຕາຕະລາງ 15. ຜົນກະທົບຂອງບັນຫາເງິນເຟີ້ ຕໍ່ລາຍຈ່າຍດ້ານການສຶກສາ

| | % ຂອງເດັກ ໃນໄວຮຽນ ທີ່ ປະລະການ ຮຽນ | ການປະລະການ ຮຽນ ຍ້ອນເຫັນຜົນ ດ້ານລາຍໄດ້ ຫຼື ຄວາມສາມາດດ້ານ ການເງິນ | ບັນຫາເງິນເຟີ້ ໄດ້ສົ່ງຜົນກະທົບ ...? (% ຂອງຄົວເຮືອນທີ່ມີລູກຫຼານໃນໄວເຂົ້າຮຽນ) | | | |
|---|---|---|---|---|---|---|
| | | | ຄ່າທຳນຽມ ໂຮງຮຽນລັດ | ຄ່າຮຽນ ໂຮງຮຽນ ເອກະຊົນ | ປຶ້ມແລະເຄື່ອງ ຂຽນ | ເຄື່ອງແບບ ນັກຮຽນ |
| ຄົວເຮືອນທັງໝົດ | 4,5 | 68,8 | 47,0 | 36,3 | 49,2 | 50,7 |
| ເຂດຕົວເມືອງ | 2,0 | 93,5 | 42,0 | 35,4 | 44,8 | 44,7 |
| ເຂດຊົນນະບົດ | 5,5 | 65,4 | 49,7 | 36,8 | 51,6 | 53,8 |
| ສ່ວນເທິງ 60 | 2,7 | 65,1 | 41,2 | 32,8 | 44,0 | 44,9 |
| ສ່ວນລຸ່ມ 40 | 6,9 | 70,8 | 60,5 | 44,6 | 61,4 | 63,9 |

ໝາຍເຫດ: ຕົວເລກ ໄດ້ຜ່ານການຄຳນວນໂດຍອີງໃສ່ສູດຖ່ວງນ້ຳໜັກ. ສ່ວນລຸ່ມ 40 ໝາຍເຖິງສ່ວນບຸກຄົນໃນສ່ວນລຸ່ມ 40 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້. ສ່ວນເທິງ 60 ໝາຍເຖິງ 60 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້.

ການຄ້ຳປະກັນ ສະບຽງອາຫານ

**ການຄ້ຳປະກັນ ທາງດ້ານສະບຽງອາຫານຢູ່ລາວ ພົບວ່າ: ມີການປັບປຸງດີຂຶ້ນໃນໄລຍະທ້າຍເດືອນທ້າຍປີ 2022.** ສ່ວນແບ່ງຂອງຄົວເຮືອນທີ່ມີການຄ້ຳປະກັນສະບຽງອາຫານ ເພີ່ມຂຶ້ນຈາກ 34,7% ໃນໄລຍະການສຳຫຼວດຄັ້ງເດືອນເມສາ/ພຶດສະພາ 2022 ມາເປັນ 39,5% ໃນໄລຍະການສຳຫຼວດຄັ້ງເດືອນທັນວາ/ມັງກອນ 2022-23.[2] ອັດຕາບັນຫາການຂາດການຄ້ຳປະກັນທາງດ້ານສະບຽງອາຫານຂັ້ນຮ້າຍແຮງ ຍັງພົບວ່າ: ຫຼຸດລົງຈາກ 23% ມາເປັນ 17,9% ໃນຊ່ວງໄລຍະເວລາດຽວກັນ (ຕາຕະລາງ 16). ໃນໄລຍະການສຳຫຼວດຄັ້ງເດືອນທັນວາ/ມັງກອນ 2022-23, 51% ຂອງຄົວເຮືອນ ແຈ້ງໃຫ້ຮູ້ວ່າ: "ກິນອາຫານພຽງແຕ່ສອງສາມປະເພດເທົ່ານັ້ນ" ເຊິ່ງເປັນຮູບແບບຂອງຄວາມບໍ່ໝັ້ນຄົງທາງດ້ານສະບຽງອາຫານທີ່ພົບເຫັນຫຼາຍສຸດ ແລະ ເຫັນໄດ້ວ່າ: ຢູ່ໃນລະດັບດຽວກັນກັບຕົວເລກທີ່ພົບໃນໄລຍະການສຳຫຼວດຄັ້ງເດືອນເມສາ/ພຶດສະພາ 2022, ໃນຂະນະດຽວກັນ ພັດພົບວ່າ: ອັດຕາຂອງຜູ້ຕອບສຳພາດທີ່ແຈ້ງວ່າ: ຫິວແຕ່ບໍ່ໄດ້ກິນ ມີການຫຼຸດລົງຈາກ 22,5% ມາເປັນ 17,9% (ຕາຕະລາງ 17).

ຕາຕະລາງ 16. ບັນຫາຄວາມບໍ່ໝັ້ນຄົງທາງດ້ານສະບຽງອາຫານ ຕາມລະດັບຄວາມຮ້າຍແຮງ, ລະຫວ່າງໄລຍະການສຳຫຼວດຄັ້ງເດືອນເມສາ/ພຶດສະພາ ເຖິງ ຄັ້ງເດືອນທັນວາ/ມັງກອນ 2022-23 (% ຂອງຄົວເຮືອນທັງໝົດ)

| | ຄັ້ງເດືອນເມສາ/ພຶດສະພາ 2022 | | | | ຄັ້ງເດືອນທັນວາ/ມັງກອນ 2022-23 | | | |
|---|---|---|---|---|---|---|---|---|
| | ບໍ່ມີບັນຫາຂາດ ການຄ້ຳປະກັນ ສະບຽງອາຫານ | ຂາດການຄ້ຳປະກັນ ສະບຽງອາຫານ ລະດັບຕ່ຳ | ຂາດການຄ້ຳປະກັນ ສະບຽງອາຫານ ລະດັບປານກາງ | ຂາດການຄ້ຳປະກັນ ສະບຽງອາຫານ ລະດັບຮ້າຍແຮງ | ບໍ່ມີບັນຫາຂາດ ການຄ້ຳປະກັນ ສະບຽງອາຫານ | ຂາດການຄ້ຳປະກັນ ສະບຽງອາຫານ ລະດັບຕ່ຳ | ຂາດການຄ້ຳປະກັນ ສະບຽງອາຫານ ລະດັບປານກາງ | ຂາດການຄ້ຳປະກັນ ສະບຽງອາຫານ ລະດັບຮ້າຍແຮງ |
| ຄົວເຮືອນທັງໝົດ | 34,7 | 20,9 | 21,4 | 23,0 | 39,5 | 18,5 | 24,1 | 17,9 |
| ເຂດຕົວເມືອງ | 42,1 | 23,5 | 20,4 | 14,0 | 45,7 | 18,4 | 25,3 | 10,6 |
| ເຂດຊົນນະບົດ | 30,7 | 19,5 | 22,0 | 27,8 | 36,2 | 18,6 | 23,4 | 21,8 |

[2] ສ່ວນແບ່ງຂອງຄົວເຮືອນທີ່ມີການຄ້ຳປະກັນທາງດ້ານສະບຽງອາຫານ ເຫັນວ່າ: ສອດຄ່ອງກັບຕົວເລກ ຂອງບົດລາຍງານຕິດຕາມການຄ້ຳປະກັນທາງດ້ານສະບຽງອາຫານ ຢູ່ ສປປ ລາວ ເຊິ່ງສ້າງໂດຍອົງການອາຫານໂລກ (WFP) ແລະ ກະຊວງກະສິກຳແລະປ່າໄມ້ ອີງຕາມຜົນການສຳຫຼວດການຄ້ຳປະກັນທາງດ້ານສະບຽງອາຫານທີ່ຈັດຕັ້ງປະຕິບັດການສຳຫຼວດທາງໄກ ເມື່ອນເດືອນພະຈິກ 2022. ຢ່າງໃດກໍດີ, ວິທີການກຳນົດລະດັບບັນຫາຄວາມບໍ່ໝັ້ນຄົງທາງດ້ານສະບຽງອາຫານຂອງການສຳຫຼວດດັ່ງກ່າວ ແມ່ນຕ່າງຈາກທີ່ນຳໃຊ້ກັບການສຳຫຼວດຄັ້ງນີ້ຂອງທະນາຄານໂລກ. ບົດລາຍງານຫຍໍ້ຜົນການສຳຫຼວດຄັ້ງນີ້ຂອງທະນາຄານໂລກ ຈັດປະເພດຄົວເຮືອນຕາມລະດັບບັນຫາຂາດການຄ້ຳປະກັນສະບຽງອາຫານ ອີງຕາມຄຳຖາມທີ່ມີໃນຕາຕະລາງ 17.

| | | | | | | | | |
|---|---|---|---|---|---|---|---|---|
| ສ່ວນເທິງ 60 | 40,5 | 21,4 | 19,9 | 18,1 | 46,3 | 19,2 | 22,1 | 12,5 |
| ສ່ວນລຸ່ມ 40 | 21,5 | 19,6 | 24,8 | 34,0 | 24,0 | 17,1 | 28,7 | 30,2 |

ໝາຍເຫດ: ຕົວເລກ ໄດ້ຜ່ານການຄໍານວນໂດຍອີງໃສ່ສູດຖ່ວງນໍ້າໜັກ. ສ່ວນລຸ່ມ 40 ໝາຍເຖິງສ່ວນບຸກຄົນໃນສ່ວນລຸ່ມ 40 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້. ສ່ວນເທິງ 60 ໝາຍເຖິງ 60 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້.

**ສະພາບການປັບປຸງຄວາມໝັ້ນຄົງທາງດ້ານສະບຽງອາຫານ ໃນກຸ່ມຄົວເຮືອນທີ່ຢູ່ໃນເຂດຕົວເມືອງ ແລະ ຄົວເຮືອນທີ່ມີລາຍໄດ້ຕໍ່າ ຍັງບໍ່ທັນເດັ່ນຊັດເທົ່າທີ່ຄວນ.** ເຖິງແມ່ນວ່າ: ສ່ວນແບ່ງຂອງຄົວເຮືອນທີ່ຂາດການຄໍ້າປະກັນສະບຽງອາຫານມີທ່າອ່ຽງຫຼຸດລົງ ໃນທົ່ວທຸກກຸ່ມຄົວເຮືອນ, ແຕ່ສັດສ່ວນຂອງຄົວເຮືອນໃນກຸ່ມຄົວເຮືອນໃນເຂດຕົວເມືອງ ແລະ ຄົວເຮືອນທີ່ມີລາຍໄດ້ຕໍ່າ ທີ່ປະເຊີນກັບບັນຫາຂາດການຄໍ້າປະກັນສະບຽງອາຫານໃນລະດັບປານກາງ ເຖິງລະດັບຮ້າຍແຮງ ພົບວ່າ: ມີຕົວເລກທີ່ເພີ່ມຂຶ້ນ ຫຼື ບໍ່ມີການປ່ຽນແປງ ໃນຂະນະທີ່ ຕົວເລກດັ່ງກ່າວ ພົບວ່າ: ຫຼຸດລົງ ສໍາລັບກຸ່ມຄົວເຮືອນໃນເຂດຊົນນະບົດ ແລະ ກຸ່ມຄົວເຮືອນທີ່ມີລາຍໄດ້ສູງ. ຢ່າງໃດກໍດີ, ຄວາມບໍ່ໝັ້ນຄົງທາງດ້ານສະບຽງອາຫານ ຍັງຄົງສືບຕໍ່ເປັນບັນຫາໃຫຍ່ໃນເຂດຊົນນະບົດຄື: ເກືອບສອງສ່ວນສາມຂອງຄົວເຮືອນໃນເຂດຊົນນະບົດ ປະເຊີນກັບບັນຫາຂາດການຄໍ້າປະກັນສະບຽງອາຫານໃນຮູບແບບໃດໜຶ່ງ. ເມື່ອປຽບທຽບໃສ່ຄົວເຮືອນໃນເຂດຕົວເມືອງເຫັນວ່າ ມີພຽງແຕ່ 54,3%ຂອງຄົວເຮືອນໃນກຸ່ມນີ້ທີ່ມີບັນຫາດັ່ງກ່າວ. ບັນຫາເງິນເຟີ້ສູງ ໄດ້ເຮັດໃຫ້ສະພາບຄວາມບໍ່ໝັ້ນຄົງທາງດ້ານສະບຽງອາຫານໃນກຸ່ມຄົວເຮືອນທີ່ມີລາຍໄດ້ຕໍ່າ ເຮັ່ງຮ້າຍຂຶ້ນໄປຕື່ມອີກ ເຊິ່ງ 76% ຂອງຄົວເຮືອນໃນສ່ວນລຸ່ມ 40 ຕ້ອງປະເຊີນກັບບັນຫາຂາດການຄໍ້າປະກັນສະບຽງອາຫານ.

**ຄ້າຍຄືກັນນັ້ນ, ຄວາມກັງວົນກ່ຽວກັບບັນຫາຂາດການຄໍ້າປະກັນສະບຽງອາຫານ ພົບວ່າ: ຫຼຸດລົງ ຍົກເວັ້ນກໍລະນີຄົວເຮືອນລາຍທີ່ມີໄດ້ຕໍ່າ.** ສັດສ່ວນຂອງຜູ້ຕອບສໍາພາດທີ່ກັງວົນສູງ ຫຼື ກັງວົນໃນລະດັບໃດໜຶ່ງກ່ຽວກັບການຄໍ້າປະກັນສະບຽງ ອາຫານ ໄດ້ຫຼຸດລົງຈາກ 69,7% ໃນໄລຍະການສໍາຫຼວດຄັ້ງເດືອນເມສາ/ພຶດສະພາ 2022 ມາເປັນ 66,7% ໃນໄລຍະການສໍາຫຼວດຄັ້ງເດືອນທັນວາ/ມັງກອນ 2022-23. ຕົວເລກການຫຼຸດລົງດັ່ງກ່າວ ພົບວ່າ: ເກີດກັບທຸກກຸ່ມຄົວເຮືອນ ຍົກ ເວັ້ນກຸ່ມຄົວເຮືອນສ່ວນລຸ່ມ 40 ເຊິ່ງໃນຈໍານວນດັ່ງກ່າວ 76,2% ແຈ້ງໃຫ້ຮູ້ວ່າ: ເຂົາເຈົ້າມີຄວາມກັງວົນກ່ຽວກັບອາຫານການກິນ (ຕາຕະລາງ 18). ລະດັບບັນຫາຂາດການຄໍ້າປະກັນສະບຽງອາຫານ ເບິ່ງຄືວ່າ: ດີຂຶ້ນ ເມື່ອພິຈາລະນາຈາກຕົວເລກຜູ້ຕອບສໍາພາດ ທີ່ແຈ້ງໃຫ້ຮູ້ວ່າ: ກັງວົນກ່ຽວກັບອາຫານການກິນ ໃນໄລຍະການສໍາຫຼວດຄັ້ງເດືອນທັນວາ/ມັງກອນ 2022-23 ມີການຫຼຸດລົງຈາກ ໄລຍະການສໍາຫຼວດຄັ້ງເດືອນເມສາ/ພຶດສະພາ 2022 ຄືຈາກ 28,5% ລົງມາຢູ່ທີ່ 23,1%.

ຕາຕະລາງ 17. ລາຍລະອຽດຂອງບັນຫາຂາດການຄ້ຳປະກັນສະບຽງອາຫານ, ໄລຍະການສຳຫຼວດຄັ້ງເດືອນທັນວາ/ມັງກອນ 2022-23 (% ຂອງຈຳນວນຄົວເຮືອນທັງໝົດ)

| | ບໍ່ມີບັນຫາຂາດການຄ້ຳປະກັນສະບຽງອາຫານ | ຂາດການຄ້ຳປະກັນສະບຽງອາຫານ ລະດັບຕ່ຳ | | | ຂາດການຄ້ຳປະກັນສະບຽງອາຫານ ລະດັບປານກາງ | | | ຂາດການຄ້ຳປະກັນສະບຽງອາຫານ ລະດັບຮ້າຍແຮງ | |
|---|---|---|---|---|---|---|---|---|---|
| | | ກັງວົນຢ້ານບໍ່ມີອາຫານການກິນພຽງພໍ | ຢ້ານບໍ່ມີກິນຢ່າງມີສຸຂະພາບແລະໂພຊະນາການ | ກິນອາຫານພຽງແຕ່ສອງສາມປະເພດເທົ່ານັ້ນ | ຕ້ອງອົດຄາບກິນຄາບ | ກິນໜ້ອຍກວ່າທີ່ຄວນກິນ | ອາຫານການກິນໝົດກ່ອນ | ທົ່ວແດ່ບໍ່ກິນ | ບໍ່ກິນຫຍັງໝົດມື້ |
| ຄົວເຮືອນທັງໝົດ | 39,5 | 44,7 | 44,6 | 51,4 | 25,3 | 38,8 | 21,1 | 17,9 | 0,0 |
| ເຂດຕົວເມືອງ | 45,7 | 41,0 | 36,6 | 44,7 | 18,6 | 34,0 | 15,9 | 10,6 | 0,0 |
| ເຂດຊົນນະບົດ | 36,2 | 46,6 | 48,8 | 55,0 | 28,9 | 41,4 | 23,8 | 21,8 | 0,0 |
| ສ່ວນເທິງ 60 | 46,3 | 38,9 | 37,1 | 44,4 | 19,0 | 32,0 | 15,8 | 12,5 | 0,0 |
| ສ່ວນລຸ່ມ 40 | 24,0 | 58,2 | 61,8 | 67,7 | 39,9 | 54,6 | 33,3 | 30,2 | 0,0 |

ໝາຍເຫດ: ຕົວເລກ ໄດ້ຜ່ານການຄຳນວນໂດຍອີງໃສ່ສູດຖ່ວງນ້ຳໜັກ. ສ່ວນລຸ່ມ 40 ໝາຍເຖິງສ່ວນບຸກຄົນໃນສ່ວນລຸ່ມ 40 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້. ສ່ວນເທິງ 60 ໝາຍເຖິງ 60 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້.

ຕາຕະລາງ 18. ຄວາມກັງວົນກ່ຽວກັບຄວາມບໍ່ໝັ້ນຄົງທາງດ້ານສະບຽງອາຫານຂອງຄົວເຮືອນຕົນເອງ, ການສຳຫຼວດໄລຍະຄັ້ງເດືອນເມສາ/ພຶດສະພາ 2022 ແລະ ຄັ້ງເດືອນທັນວາ/ມັງກອນ 2022-23 (% ຂອງຈຳນວນຄົວເຮືອນທັງໝົດ)

| | ຄັ້ງເດືອນເມສາ/ພຶດສະພາ 2022 | | | ຄັ້ງເດືອນທັນວາ/ມັງກອນ 2022-23 | | |
|---|---|---|---|---|---|---|
| | ກັງວົນຫຼາຍ | ກັງວົນລະດັບໃດໜຶ່ງ | ບໍ່ກັງວົນ | ກັງວົນຫຼາຍ | ກັງວົນລະດັບໃດໜຶ່ງ | ບໍ່ກັງວົນ |
| ຄົວເຮືອນທັງໝົດ | 28,5 | 41,2 | 30,3 | 23,1 | 43,6 | 33,26 |
| ເຂດຕົວເມືອງ | 26,0 | 40,2 | 33,8 | 23,9 | 41,1 | 34,9 |
| ເຂດຊົນນະບົດ | 29,9 | 41,8 | 28,4 | 22,7 | 44,9 | 32,4 |
| ສ່ວນເທິງ 60 | 25,1 | 42,4 | 32,4 | 19,7 | 43,0 | 37,4 |
| ສ່ວນລຸ່ມ 40 | 36,1 | 38,5 | 25,4 | 31,2 | 45,0 | 23,8 |

ໝາຍເຫດ: ຕົວເລກ ໄດ້ຜ່ານການຄຳນວນໂດຍອີງໃສ່ສູດຖ່ວງນ້ຳໜັກ. ສ່ວນລຸ່ມ 40 ໝາຍເຖິງສ່ວນບຸກຄົນໃນສ່ວນລຸ່ມ 40 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້. ສ່ວນເທິງ 60 ໝາຍເຖິງ 60 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້.

ບໍລິການສາທາລະນະ

**ຄົວເຮືອນສ່ວນຫຼາຍ ສາມາດເຂົ້າເຖິງບໍລິການເບິ່ງແຍງສຸຂະພາບ ແລະ ບໍລິການຕ່າງໆຂອງພາກລັດ.** ການສຳຫຼວດພົບວ່າ: ການເຂົ້າເຖິງການບໍລິການຕ່າງໆຂອງພາກລັດບໍ່ມີຄວາມແຕກຕ່າງກັນຫຼາຍໃນບັນດາກຸ່ມຄົວເຮືອນຕ່າງໆ (ຕາຕະລາງ 19). ຢ່າງໃດກໍດີ, ສຳລັບຜູ້ທີ່ບໍ່ປະເຊີນກັບຄວາມຫຍຸ້ງຍາກ ພົບວ່າ: ລັກສະນະຂອງອຸປະສັກກີດຂວາງ ແຕກຕ່າງກັນໄປຕາມແຕ່ລະປະເພດຂອງຄົວເຮືອນ. ມີຄວາມເປັນໄປໄດ້ຫຼາຍກວ່າທີ່ ຄົວເຮືອນທີ່ທຸກຍາກ ແລະ ຄົວເຮືອນໃນເຂດຊົນນະບົດ ຈະປະເຊີນກັບຄວາມຫຍຸ້ງຍາກໃນການເດີນທາງໄປຫ້ອງການລັດເພື່ອຊົມໃຊ້ບໍລິການສາທາລະນະ ໃນຂະນະທີ່ຄົວເຮືອນທີ່ມີຖານະ ແລະ ຄົວເຮືອນໃນເຂດຕົວເມືອງ ພົບພໍ້ສະພາບບໍລິການສາທາລະນະທີ່ມີຄຸນນະພາບຕ່ຳ ແລະ ບັນຫາ

ຫ້ອງການໃຫ້ບໍລິການທີ່ມີພະນັກງານຮັບໃຊ້ບໍ່ພຽງພໍ. ນັບແຕ່ເດືອນມັງກອນ 2022 ພົບວ່າ: ໜ້ອຍກວ່າເຄິ່ງຂອງຄົວເຮືອນທັງໝົດ ມີຄວາມຈໍາເປັນຕ້ອງໃຊ້ບໍລິການປິ່ນປົວສຸຂະພາບ ແລະ ເກືອບທັງໝົດສາມາດເຂົ້າເຖິງບໍລິການດັ່ງກ່າວ.

**ຜູ້ຕອບສໍາພາດ ແຈ້ງໃຫ້ຮູ້ວ່າ: ບັນຫາເງິນເຟີ້ ແລະ ການອ່ອນຄ່າຂອງເງິນກີບ ເປັນບັນຫາຮີບດ່ວນທີ່ລັດຖະບານຕ້ອງແກ້ໄຂ.** ບູລິມະສິດດ້ານນະໂຍບາຍທີ່ລັດຕ້ອງແກ້ໄຂ ເພື່ອຊ່ວຍເຫຼືອຄົວເຮືອນສ່ວນໃຫຍ່ ມີຄື: ການແກ້ໄຂບັນຫາລາຄານໍ້າມັນເຊື້ອໄຟທີ່ເພີ່ມສູງຂຶ້ນ, ການອ່ອນຄ່າຂອງເງິນກີບ ແລະ ລາຄາສະບຽງອາຫານ, ສິນຄ້າແລະບໍລິການອື່ນໆ ທີ່ເພີ່ມສູງຂຶ້ນ (ຕາຕະລາງ 20). ເຖິງແມ່ນວ່າ ມີບັນຫາເງິນເຟີ້ຂອງລາຄາສະບຽງອາຫານທີ່ຢູ່ໃນລະດັບສູງ (ຢູ່ທີ່ 40% ຕາມຂໍ້ມູນເດືອນມັງກອນ 2023) ແຕ່ມີພຽງ 13,5% ຂອງຈໍານວນຄົວເຮືອນທັງໝົດ ລວມທັງພາກສ່ວນຄົວເຮືອນໃນສ່ວນລຸ່ມ 40 ທີ່ເຫັນວ່າ: ບັນຫາດັ່ງກ່າວ ເປັນບູລິມະສິດທາງດ້ານນະໂຍບາຍທີ່ສໍາຄັນສຸດ ທີ່ລັດຖະບານຕ້ອງແກ້ໄຂ.

ຕາຕະລາງ 19: ການໃຊ້ບໍລິການທາງດ້ານສາທາລະນະ

| | ບໍລິການຕ່າງໆຂອງລັດ | | | ບໍລິການດ້ານການເບິ່ງແຍງສຸຂະພາບ | |
|---|---|---|---|---|---|
| | ຄວາມຫຍຸ້ງຍາກໃນການເຂົ້າເຖິງ (% ຂອງຈໍານວນຄົວເຮືອນທັງໝົດ) | ເຫດຜົນຄວາມຫຍຸ້ງຍາກ (% ຂອງຄົວເຮືອນທີ່ມີຄວາມຫຍຸ້ງຍາກ): ບໍ່ສາມາດເດີນທາງໄປຮັບບໍລິການຢູ່ຫ້ອງການລັດກ່ຽວຂ້ອງ | ເຫດຜົນຄວາມຫຍຸ້ງຍາກ (% ຂອງຄົວເຮືອນທີ່ມີຄວາມຫຍຸ້ງຍາກ): ບໍລິການຄຸນນະພາບຕໍ່າ ຫຼື ພະນັກງານຮັບໃຊ້ບໍ່ພຽງພໍ | ຈໍາເປັນຕ້ອງໃຊ້ບໍລິການປິ່ນປົວສຸຂະພາບ (% ຂອງຈໍານວນຄົວເຮືອນທັງໝົດ) | ສາມາດເຂົ້າເຖິງບໍລິການດ້ານການເບິ່ງແຍງສຸຂະພາບ (% ຂອງຄົວເຮືອນທີ່ຈໍາເປັນຕ້ອງໃຊ້ບໍລິການດ້ານສຸຂະພາບ) |
| ຄົວເຮືອນທັງໝົດ | 4,0 | 32,5 | 49,8 | 39,8 | 98,8 |
| ເຂດຕົວເມືອງ | 3,7 | 20,5 | 68,6 | 37,2 | 98,7 |
| ເຂດຊົນນະບົດ | 4,1 | 38,4 | 40,6 | 41,3 | 98,9 |
| ສ່ວນເທິງ 60 | 4,2 | 23,7 | 55,3 | 39,5 | 99,5 |
| ສ່ວນລຸ່ມ 40 | 3,3 | 58,6 | 33,3 | 40,7 | 97,4 |

ໝາຍເຫດ: ຕົວເລກ ໄດ້ຜ່ານການຄໍານວນໂດຍອີງໃສ່ສູດຖ່ວງນໍ້າໜັກ. ສ່ວນລຸ່ມ 40 ໝາຍເຖິງສ່ວນບຸກຄົນໃນສ່ວນລຸ່ມ 40 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້. ສ່ວນເທິງ 60 ໝາຍເຖິງ 60 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້.

ຕາຕະລາງ 20: ບັນຫາຮີບດ່ວນ ທີ່ລັດຖະບານຕ້ອງຊ່ວຍແກ້ໄຂເປັນສິ່ງທໍາອິດ (% ຂອງຜູ້ຕອບສໍາພາດ)

| | ບັນຫາລາຄານໍ້າມັນເຊື້ອໄຟທີ່ເພີ່ມສູງຂຶ້ນ | ບັນຫາການອ່ອນຄ່າຂອງເງິນກີບ | ບັນຫາເງິນເຟີ້ (ບໍ່ລວມສະບຽງອາຫານ ແລະ ນໍ້າມັນເຊື້ອໄຟ) | ບັນຫາລາຄາສະບຽງອາຫານທີ່ເພີ່ມສູງຂຶ້ນ | ບັນຫາລາຄາປັດໄຈການຜະລິດທີ່ເພີ່ມສູງຂຶ້ນ | ເງິນເດືອນບໍ່ພໍໃຊ້ຍ້ອນເງິນເຟີ້ |
|---|---|---|---|---|---|---|
| ຄົວເຮືອນທັງໝົດ | 25,1 | 21,5 | 18,4 | 13,5 | 3,3 | 2,4 |
| ເຂດຕົວເມືອງ | 23,9 | 24,4 | 19,4 | 14,0 | 2,5 | 3,0 |
| ເຂດຊົນນະ ບົດ | 25,7 | 19,9 | 17,9 | 13,2 | 3,7 | 2,1 |
| ສ່ວນເທິງ 60 | 24,9 | 22,8 | 18,9 | 13,5 | 3,2 | 2,6 |
| ສ່ວນລຸ່ມ 40 | 25,5 | 18,5 | 17,4 | 13,5 | 3,4 | 2,0 |

ໝາຍເຫດ: ຕົວເລກ ໄດ້ຜ່ານການຄໍານວນໂດຍອີງໃສ່ສູດຖ່ວງນໍ້າໜັກ. ສ່ວນລຸ່ມ 40 ໝາຍເຖິງສ່ວນບຸກຄົນໃນສ່ວນລຸ່ມ 40 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້. ສ່ວນເທິງ 60 ໝາຍເຖິງ 60 ສ່ວນຮ້ອຍຂອງການແຈກຢາຍດ້ານການຊົມໃຊ້.

ຄາດຄະເນ

ເຖິງວ່າ ຕະຫຼາດແຮງງານ ມີການຟື້ນຕົວທີ່ເຂັ້ມແຂງ ແຕ່ກຸ່ມຄົວເຮືອນຕ່າງໆຢູ່ລາວ ຍັງປະເຊີນກັບສິ່ງທ້າທາຍຫຼາຍຢ່າງ ຈາກບັນຫາເງິນເຟີ້. ພົບວ່າ: ຄົວເຮືອນສ່ວນໃຫຍ່ ເວົ້າສະເພາະກຸ່ມຄົວເຮືອນທີ່ມີສະພາບບອບບາງ ແມ່ນມີຄວາມສາມາດທີ່ຈໍາກັດໃນການ ຮັບມືກັບລາຄາສິນຄ້າ ແລະ ບໍລິການຕ່າງໆ ທີ່ເພີ່ມສູງຂຶ້ນ ຍ້ອນເຂົາເຈົ້າ ຂາດເງິນແຮ, ຊັບສິນ ແລະ ຍັງຂາດຄວາມສາມາດໃນການເຂົ້າເຖິງແຫຼ່ງເງິນກູ້ໃນລະບົບ. ສ່ວນມາດຕະການຊ່ວຍເຫຼືອຂອງລັດຖະບານ ພັດຖືກຈໍາກັດຍ້ອນສະພາບງົບປະມານຂອງລັດທີ່ມີຈໍາກັດ, ສະນັ້ນ ບັນດາຄົວເຮືອນຕ່າງໆ ໄດ້ຫັນໄປເຮັດການຜະລິດກະສິກໍາ, ສ່ວນອີກຈໍານວນໜຶ່ງໄດ້ໝູນໃຊ້ຍຸດທະສາດຮັບມືໃນທາງລົບ ເຊິ່ງຈະມີຜົນກະທົບທາງລົບຕໍ່ຊີວິດການເປັນຢູ່ຂອງເຂົາເຈົ້າໃນໄລຍະຍາວ. ຊາວກະສິກອນລາວ ຍັງມີຄວາມບອບບາງສູງ ຕໍ່ຄວາມສ່ຽງທີ່ເພີ່ມສູງຂຶ້ນຈາກຜົນກະທົບທາງໄພພິບັດທໍາມະຊາດແລະບັນຫາການປ່ຽນແປງສະພາບດິນຟ້າອາກາດ. ການຈໍາກັດລາຍຈ່າຍດ້ານການສຶກສາແລະການເບິ່ງແຍງສຸຂະພາບ ເຮັດໃຫ້ເກີດຄວາມສ່ຽງສູງຂອງການເກີດຜົນກະທົບທາງລົບຕໍ່ການພັດທະນາທຶນມະນຸດ ເວົ້າສະເພາະຜົນກະທົບທີ່ຈະມີຕໍ່ບັນດາກຸ່ມຄົວເຮືອນທີ່ມີຄວາມບອບບາງ.

ການສ້າງເສດຖະກິດໃຫ້ເຂັ້ມແຂງຂຶ້ນກວ່າເກົ່າ ໃນໄລຍະການຟື້ນຟູຫຼັງພະຍາດລະບາດໂຄວິດ 19 ໃນຂະນະດຽວກັນກໍ່ຕ້ອງປົກປ້ອງກຸ່ມຄົວເຮືອນຕ່າງໆ ຈາກບັນຫາການເພີ່ມຂຶ້ນຂອງຄ່າຄອງຊີບ ແລະ ຜົນກະທົບຈາກການປ່ຽນແປງສະພາບດິນຟ້າອາດ ແມ່ນຈໍາເປັນຕ້ອງມີມາດຕະການທາງດ້ານນະໂຍບາຍ ທີ່ຕອບສະໜອງໄດ້ຕາມຄວາມຄາດມຸ່ງຫວັງຂອງພົນລະເມືອງ. ດ້ວຍເຫດນັ້ນ, ຈຶ່ງເປັນເລື່ອງສໍາຄັນ ທີ່ຕ້ອງສືບຕໍ່ຕິດຕາມການຟື້ນຕົວຂອງຄົວເຮືອນ ຫຼັງພະຍາດລະບາດ ແລະ ຜົນກະທົບຕ່າງໆທາງດ້ານເສດຖະກິດ-ສັງຄົມຈາກບັນຫາການຂາດສະຖຽນລະພາບທາງດ້ານເສດຖະກິດມະຫາພາກທີ່ຮ້າຍແຮງຂຶ້ນ.

## ວິທີການວິທະຍາທີ່ໃຊ້ໃນການສຳຫຼວດ

ບົດລາຍງານຫຍໍ້ສະບັບນີ້ ສັງລວມບັນດາຜົນໄດ້ຮັບຈາກການສຳຫຼວດທາງໂທລະສັບ ເພື່ອຕິດຕາມສະຫວັດດີການຂອງຄົວເຮືອນ ຢູ່ ສປປ ລາວ. ການໂທສຳຫຼວດຕົວຈິງ ແມ່ນຈັດຕັ້ງປະຕິບັດ ໂດຍບໍລິສັດອິນໂດຊາຍນາ. ການຄັດເລືອກກຸ່ມຕົວແທນ ແມ່ນນຳໃຊ້ເຕັກນິກການສຸ່ມໂທສຳພາດ. ກຸ່ມຕົວແທນສຸດທ້າຍຂະໜາດ 2.000 ຄົວເຮືອນ ເຫັນວ່າ: ເປັນຕົວແທນໃຫ້ຄົວເຮືອນກຸ່ມຕ່າງໆໃນທົ່ວປະເທດ. ພ້ອມນີ້ ໄດ້ມີການດັດປັບນ້ຳໜັກການສຳຫຼວດ ໃຫ້ກົງກັບ ສັດສ່ວນຄົວເຮືອນໃນເຂດຕົວເມືອງ, ເຂດຊົນນະບົດ, ແລະ ໃນແຕ່ລະພາກຂອງປະເທດ, ຂະໜາດຂອງຄົວເຮືອນ ແລະ ອັດຕາການເພິ່ງພາອາໄສ ເພື່ອສ້າງຄວາມເຂັ້ມແຂງໃຫ້ການເປັນກຸ່ມຕົວແທນຂອງຈຳນວນຄົວເຮືອນໃນທົ່ວປະເທດ.

ການໂທສຳພາດ ແມ່ນດຳເນີນກັບຕົວແທນທີ່ມີອາຍຸຢ່າງຕ່ຳ 18 ປີ ຂອງແຕ່ລະຄົວເຮືອນ. ປະມານ 63% ຂອງຜູ້ຕອບສຳພາດ ແມ່ນເພດຊາຍ ແລະ 75% ແມ່ນເຜົ່າໄຕລາວ. ປະມານ 34% ແລະ 47% ຂອງຜູ້ຕອບສຳພາດ ແມ່ນຢູ່ໃນກຸ່ມອາຍຸ 18-34 ປີ ແລະ 35-54 ປີ ຕາມລຳດັບ. 59% ຂອງຜູ້ຕອບສຳພາດ ເປັນຫົວໜ້າຄອບຄົວ, 21% ແມ່ນຜົວ ຫຼື ເມຍ ແລະ ອີກ 15% ແມ່ນລູກຊາຍ ຫຼື ລູກສາວ.

ການໂທສຳຫຼວດຄັ້ງຫຼ້າສຸດ ແມ່ນໄດ້ຈັດຕັ້ງປະຕິບັດໃນໄລຍະວັນທີ 5 ທັນວາ 2022 ເຖິງ ເດືອນມັງກອນ 2023. ເດືອນມີນາ 2022 ແມ່ນເດືອນອ້າງອີງຂອງໄລຍະເກີດການລະບາດຂອງພະຍາດໂຄວິດ 19 ໃນຮອບທຳອິດ, ສ່ວນເດືອນເມສາ 2021 ແມ່ນເດືອນອ້າງອີງຂອງການລະບາດໃນຮອບທີສອງ. ຄຳຕອບອ້າງອີງທີ່ມີກ່ຽວກັບສະພາບກ່ອນການລະບາດຂອງພະຍາດໂຄວິດ 19 ແມ່ນຂໍ້ມູນເດືອນກຸມພາ 2020.

ເຄື່ອງມືການສຳຫຼວດ ປະກອບດ້ວຍຄຳຖາມກ່ຽວກັບການມີວຽກເຮັດງານທຳ, ຄົວເຮືອນທີ່ເຮັດການຜະລິດກະສິກຳ, ທຸລະກິດຄອບຄົວ, ແຫຼ່ງລາຍໄດ້ ແລະ ການສູນເສຍລາຍໄດ້, ການຄ້ຳປະກັນສະບຽງອາຫານ, ຜົນກະທົບຕ່າງໆ ແລະ ຍຸດທະສາດການຮັບມື, ຄຳຖາມກ່ຽວກັບລາຍຈ່າຍດ້ານການສຶກສາ, ດ້ານການເບິ່ງແຍງປິ່ນປົວສຸຂະພາບ ຕະຫຼອດເຖິງຄຳຖາມກ່ຽວກັບມາດຕະການຊ່ວຍເຫຼືອຕ່າງໆຂອງລັດຖະບານ.